# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-31 ຕຸລາ 2024

ປີທີ 13

ສະບັບທີ 991

ລາຍສັປະດາ


## ພິທີເປີດກອງປະຊຸມສະມັດຊາໃຫຍ່ ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45



ອ່ານຕໍ່ໜ້າ 7

## ສະພາແຫ່ງຊາດ ລາວ-ຫວຽດນາມ ຮັດແໜ້ນ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່

(ສພຊ) - ໂດຍຕອບສະໜອງຕາມຄຳເຊື້ອເຊີນຂອງສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ສະຫາຍ ເຈິ່ນ ແທັງ ເໝິນ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດແຫ່ງສສ.ຫວຽດນາມ ໄດ້ເດີນທາງມາຢ້ຽມຢາມສາທາ

ອ່ານຕໍ່ໜ້າ 8



## ກອງປະຊຸມຄະນະບໍລິຫານງານໄອປາ




(ສພຊ) - ວັນທີ 18 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ ໄດ້ມີກອງປະຊຸມຄະນະບໍລິຫານງານໄອປາ ໂດຍການເປັນປະທານຂອງທ່ານປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງສປປລາວ, ປະທານAIPA ຄັ້ງທີ45; ມີບັນດາທ່ານປະທານ,

ອ່ານຕໍ່ໜ້າ 8

## ປະທານສະພາແຫ່ງຊາດ ພົບປະປະທານລັດຖະສະພາສິງກະໂປ

(ສພຊ)-ວັນທີ18ຕຸລາຜ່ານມານີ້ທີ່ສະພາແຫ່ງຊາດ, ທ່ານປອ. ໄຊສົມພອນພົມວິຫານປະທານສະພາແຫ່ງຊາດໄດ້ຕ້ອນຮັບແລະພົບປະທ່ານເຊຍຄຽນເປັງ (Seah Kian Peng) ປະທານລັດຖະສະພາ ແຫ່ງ ສາທາລະນະລັດ ສິງກະໂປ ພ້ອມດ້ວຍຄະນະໃນໂອກາດເດີນທາງມາເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ

ອ່ານຕໍ່ໜ້າ 6



## ຮອງປະທານສະພາດູມາ ຢ້ຽມຂໍ່ານັບປະທານສະພາແຫ່ງຊາດ ແລະ ພົບປະ ພົທ. ສຸວອນ ເລືອງບຸນມີ



ອ່ານຕໍ່ໜ້າ 11

## ກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ




ອ່ານຕໍ່ໜ້າ 9

## ກວດກາສະຖານທີ່ຈັດກອງປະຊຸມໄອປາ



ອ່ານຕໍ່ໜ້າ 11

## ກອງປະຊຸມຄົບຄະນະວາລະທີ 1 ຂອງກອງປະຊຸມໃຫຍ່ AIPA ຄັ້ງທີ 45

(ສພຊ) - ຕອນບ່າຍວັນທີ 19 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ ໄດ້ມີກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ ຫຼື ໄວປາ (WAIPA) ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດລາວ, ປະທານໄອປາ 45; ເຂົ້າຮ່ວມມີທ່ານ ນາງ ທຸມ

ອ່ານຕໍ່ໜ້າ 11



**ຊົມເຊີຍກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຢ່າງສຸດໃຈ!**

# ຮອງປະທານສະພາແຫ່ງຊາດກ່າວປາໄສຕໍ່ກອງປະຊຸມຄົບຄະນະວາລະທີ 1 ຂອງກອງປະຊຸມໃຫຍ່ AIPA ຄັ້ງທີ 45



(ສພຊ) - ຕອນບ່າຍວັນທີ 19 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ກ່າວປາໄສຕໍ່ກອງປະຊຸມຄົບຄະນະວາລະທີ1ຂອງກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວທັງເປັນປະທານAIPA ຄັ້ງທີ 45; ເຂົ້າຮ່ວມມີບັນດາທ່ານປະທານລັດຖະສະພາ, ຫົວໜ້າຄະນະຜູ້ແທນລັດຖະສະພາສະມາຊິກໄອປາ ແລະ ບັນດາທ່ານຫົວໜ້າຄະນະຜູ້ແທນລັດຖະສະພາສັງເກດການຂອງໄອປາ, ບັນດາທ່ານສະມາຊິກລັດຖະສະພາ, ທ່ານເລຂາທິການໃຫຍ່ໄອປາ, ທ່ານເລຂາທິການໃຫຍ່ອາຊຽນ ແລະບັນດາແຂກຖືກເຊີນ.

ທ່ານຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງທີ່ໄດ້ຕ້ອນຮັບແລະຂອບໃຈບັນດາລັດຖະສະພາສະມາຊິກໄອປາ, ລັດຖະສະພາສັງເກດການໄອປາ, ບັນດາແຂກ ແລະຄູ່ຮ່ວມພັດທະນາຂອງໄອປາ ທີ່ໄດ້ໃຫ້ການຮ່ວມມື ແລະ ສະໜັບສະໜູນສະພາແຫ່ງຊາດແຫ່ງສປປລາວ ໃນການເປັນເຈົ້າພາບຈັດກອງປະຊຸມຄັ້ງນີ້. ເພື່ອສືບຕໍ່ເຮັດໃຫ້ອາຊຽນກາຍເປັນປະຊາຄົມແຫ່ງການເຊື່ອມໂຍງ-ເຊື່ອມຈອດຢ່າງຮອບດ້ານໃນຕໍ່ໜ້າ, ກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ45ຈຶ່ງໄດ້ຈັດຂຶ້ນພາຍໃຕ້ຫົວຂໍ້: "ບົດບາດຂອງລັດຖະສະພາໃນການຊຸກຍູ້ການເຊື່ອມຈອດ ແລະ ການຈະເລີນເຕີບໂຕແບບກວມລວມຂອງອາຊຽນ" ເຫັນວ່າຄໍາຂວັນດັ່ງກ່າວ ແມ່ນສອດຄ່ອງກັບທ່າອຽງຂອງພາກພື້ນ ກໍຄືການຮັດແໜ້ນການເຊື່ອມໂຍງ ແລະເຊື່ອມຈອດທາງດ້ານເສດຖະກິດພາຍໃນພາກພື້ນໃຫ້ຫຼາຍຂຶ້ນ ເປັນຕົ້ນແມ່ນການຂົນສົ່ງ, ໂທລະຄົມມະນາຄົມ, ການຫັນເປັນດິຈິຕອນ, ພະລັງງານ, ສົ່ງເສີມການໄປມາຫາສູ່ຂອງປະຊາຊົນ, ອຳນວຍຄວາມສະດວກດ້ານການຄ້າ, ການລົງທຶນ, ການທ່ອງທ່ຽວ, ການຜະລິດ, ການບໍລິການ ແລະການສະໜອງແບບຕ່ອງໂສ້ການຜະລິດໃຫ້ມີຄວາມໂລ່ງລ່ຽນ, ສ້າງພື້ນຖານໂຄງລ່າງດ້ານເສດຖະກິດໃຫ້ມີຄວາມເຂັ້ມແຂງ, ກວມລວມ, ຍືນຍົງ, ຮັດແຄບຄວາມແຕກໂຕນທາງການພັດທະນາໃນປະເທດອາຊຽນ ແລະສາມາດສະກັດກັ້ນ, ແກ້ໄຂວິກິດການແລະສິ່ງທ້າທາຍຕ່າງໆທີ່ອາດຈະເກີດຂຶ້ນໃນອະນາຄົດ; ພ້ອມດຽວກັນນີ້, ຄໍາຂວັນດັ່ງກ່າວຍັງສອດຄ່ອງກັບນະໂຍບາຍແຫ່ງຊາດກໍຄືຄວາມພະຍາຍາມຂອງ ສປປລາວ ທີ່ຈະຫັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ໃຫ້ມີການເຊື່ອມໂຍງ ແລະເຊື່ອມຈອດກັບບັນດາປະເທດສະມາຊິກອາຊຽນຫຼາຍຂຶ້ນ ແລະ ກ້າວໄປສູ່ການເຊື່ອມໂຍງ-ເຊື່ອມຈອດກັບນອກພາກພື້ນ.

ທ່ານປອ. ນາງສູນທອນ ໄຊຍະຈັກ ກ່າວວ່າ: ໃນຂະບວນການສ້າງປະຊາຄົມອາຊຽນໃຫ້ມີຄວາມເຂັ້ມແຂງນັ້ນ, ໄອປາ ມີຄວາມຈຳເປັນທີ່ຈະຕ້ອງໄດ້ເພີ່ມທະວີການຮ່ວມມືກັນ ໂດຍຜ່ານການເຊື່ອມໂຍງ-ເຊື່ອມຈອດ ແລະ ການເຕີບໂຕແບບກວມລວມ, ນຳໃຊ້ດິຈິຕອນແບບກວມລວມເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊາດໃນພາກພື້ນ, ສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນໃນການຮັກສາສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາ, ສົ່ງເສີມການລະດົມທຶນເພື່ອພັດທະນາການເຊື່ອມຈອດດ້ານພື້ນຖານໂຄງລ່າງ, ສົ່ງເສີມການເຊື່ອມໂຍງດ້ານເຕັກໂນໂລຊີດິຈິຕອນ ແລະ ດ້ານອື່ນໆ, ປະກອບສ່ວນສ້າງປະຊາຄົມອາຊຽນທີ່ປອດໄພ, ເຂັ້ມແຂງແລະກວມລວມ ແນໃສ່ຮັບປະກັນການປົກປັກຮັກສາສັນຕິພາບ, ສະຖຽນລະພາບ, ຄວາມໝັ້ນຄົງ ແລະຄວາມຈະເລີນຮຸ່ງເຮືອງພ້ອມທັງຮັບປະກັນໃຫ້ສາມາດບັນລຸໄດ້ຕາມແຜນແມ່ບົດປະຊາຄົມອາຊຽນ2025ແລະຕໍ່ໜ້າ. ພ້ອມດຽວກັນນັ້ນ, ລັດຖະສະພາສະມາຊິກໄອປາ ຕ້ອງໃຫ້ຄວາມສຳຄັນຕໍ່ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ, ສືບຕໍ່ປັບປຸງຂອບກົດໝາຍ ແລະ ນະໂຍບາຍ ໃຫ້ມີຄວາມສອດຄ່ອງພາຍໃນປະເທດສະມາຊິກອາຊຽນ, ຊຸກຍູ້ການໃຫ້ສັດຕະຍາບັນແກ່ສັນຍາ ແລະ ສົນທິສັນຍາ ໃນຂອບການຮ່ວມມືດ້ານຕ່າງໆຂອງອາຊຽນ, ຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳທີ່ກ່ຽວຂ້ອງໃນຂົງເຂດວຽກງານຕ່າງໆຂອງອາຊຽນລວມທັງກົດບັດອາຊຽນ ໃຫ້ມີປະສິດທິພາບ ແລະມີປະສິດທິຜົນ ເພື່ອນຳເອົາຜົນປະໂຫຍດສູງສຸດ ມາສູ່ປະຊາຊົນຢ່າງທົ່ວເຖິງ; ຕ້ອງສືບຕໍ່ຊຸກຍູ້ ແລະ ຮັດແໜ້ນການຮ່ວມມືກັບຄູ່ຮ່ວມມືພາຍນອກຂອງອາຊຽນ ເພື່ອປະກອບສ່ວນເຂົ້າໃນຂະບວນການສ້າງປະຊາຄົມອາຊຽນ ກໍຄືການປົກປັກຮັກສາແລະສົ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາໃນພາກພື້ນ ກໍຄືໃນໂລກ.

ທ່ານຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ ມີຄວາມເຊື່ອໝັ້ນວ່າ ລັດຖະສະພາສະມາຊິກໄອປາ ຈະສືບຕໍ່ເພີ່ມທະວີຍົກສູງກົນໄກການຮ່ວມມືເຊິ່ງກັນແລະກັນ ໃນການສ້າງຄວາມກົມກຽວທາງດ້ານກົດໝາຍ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຊື່ອມໂຍງ-ເຊື່ອມຈອດຂອງອາຊຽນ ໃຫ້ກາຍເປັນຮູບປະທຳຫຼາຍຂຶ້ນ; ຊຸກຍູ້ລັດຖະບານໃຫ້ຍົກສູງວິທີການ ແລະ ກົນໄກການພົວພັນຮ່ວມມືທີ່ເໝາະສົມກັບພາຍນອກ ເພື່ອສົ່ງເສີມການລົງທຶນດ້ານການກໍ່ສ້າງພື້ນຖານໂຄງລ່າງອາຊຽນທີ່ອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງ, ການຄ້າ, ການລົງທຶນ, ອຸດສາຫະກຳການທ່ອງທ່ຽວ ແລະອື່ນໆ ເພື່ອບັນລຸໄດ້ຕາມວິໄສທັດປະຊາຄົມອາຊຽນ 2025 ແລະ ເປົ້າໝາຍການພັດທະນາແບບຍືນຍົງ 2030 ຕາມທີ່ອົງການສະຫະປະຊາຊາດໄດ້ກຳນົດໄວ້.

**(ນາງ ສຸມິນທາ ງາໄຊ)**

# ປຶກສາຫາລືລະຫວ່າງກອງເລຂາໄອປາ ແລະ ອາຊຽນ




(ສພຊ)-ເພື່ອປຶກສາຫາລື ແລະ ຮັບຟັງຄໍາຄິດຄໍາເຫັນເຊິ່ງກັນແລະກັນກ່ຽວກັບການປະສານງານ ແລະ ການປະຕິບັດໜ້າທີ່ຕາມພາລະບົດບາດ ໃນການຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດແຜນງານຕ່າງໆຂອງອາຊຽນ ກໍຄືບັນດາມະຕິຂອງໄອປາ ໃຫ້ມີປະສິດທິພາບແລະບັນລຸຕາມຈຸດປະສົງລະດັບຄາດໝາຍ; ຕອນບ່າຍວັນທີ 19 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ ໄດ້ມີກອງປະຊຸມພົບປະປຶກສາຫາລືລະຫວ່າງກອງເລຂາໄອປາ ແລະ ກອງເລຂາອາຊຽນ ພາຍໃຕ້ຫົວຂໍ້: "ຊຸກຍູ້ການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມຂອງອາຊຽນ: ສົ່ງເສີມການພົບປະ, ການຮ່ວມມື ແລະ ການປຶກສາຫາລື ລະຫວ່າງໄອປາ ແລະ ອາຊຽນ".

ທ່ານປອ. ນາງສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ມີຄໍາເຫັນວ່າ: ກອງປະຊຸມຄັ້ງນີ້ ຈະໄດ້ລົງເລິກກ່ຽວກັບການເພີ່ມທະວີການປະສານງານ, ການປຶກສາຫາລືລະຫວ່າງກອງເລຂາໄອປາ ແລະ ອາຊຽນ ເພື່ອຮັບປະກັນການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມໃນພາກພື້ນ; ການປຶກສາຫາລືພາຍໃຕ້ຫົວຂໍ້ດັ່ງກ່າວ ຈະເປັນປະໂຫຍດຫຼາຍໃນການເສີມຂະຫຍາຍບົດບາດ ແລະ ໜ້າທີ່ຂອງສອງອົງການໃຫ້ມີປະສິດທິພາບກວ່າເກົ່າ ປະກອບສ່ວນເຂົ້າໃນການຊຸກຍູ້ບົດບາດການເປັນແກນກາງຂອງອາຊຽນ, ສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນໃຫ້ຫຼາຍຂຶ້ນ ເພື່ອບັນລຸວິໄສທັດການສ້າງປະຊາຄົມອາຊຽນ2025 ແລະ ໄລຍະຕໍ່ໜ້າ. ອາຊຽນ-ໄອປາ ໄດ້ມີການຮ່ວມມື, ຕິດຕໍ່ພົວພັນ ແລະ ປະສານງານເຊິ່ງກັນແລະກັນ ໃນຖານະເປັນຄູ່ຮ່ວມມືຜ່ານກົນໄກການຈັດກອງປະຊຸມລະຫວ່າງຜູ້ນຳອາຊຽນ-ໄອປາ ແລະ ກອງປະຊຸມປຶກສາຫາລືລະຫວ່າງເລຂາທິການໃຫຍ່ຂອງອາຊຽນ ແລະ ໄອປາ ໄດ້ປະສົບຜົນສຳເລັດຫຼາຍດ້ານ; ເຖິງຢ່າງໃດກໍຕາມ, ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ແລະ ຮັບມືກັບສິ່ງທ້າທາຍຕ່າງໆທີ່ພວມປະເຊີນໜ້າຢູ່ໃນປັດຈຸບັນ ກໍຄືໃນອະນາຄົດ ແລະເພື່ອເຮັດໃຫ້ວຽກງານຂອງລັດຖະບານມີການເກາະກ່າຍກະທົບເຊິ່ງກັນແລະກັນ ກໍຄືການປະສານງານກັບວຽກງານນິຕິບັນຍັດໃຫ້ກົມກຽວນັ້ນ, ຍິ່ງຕ້ອງເພີ່ມທະວີການພົວພັນຮ່ວມມືແລະການປຶກສາຫາລືໃຫ້ຫຼາຍຂຶ້ນ ເພື່ອຮັບປະກັນໃຫ້ແກ່ການພົວພັນຮ່ວມມືລະຫວ່າງລັດຖະບານ ແລະ ລັດຖະສະພາຂອງປະເທດອາຊຽນ ກໍຄືຄູ່ຮ່ວມມືຂອງອາຊຽນ-ໄອປາ ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ ແນໃສ່ປະຕິບັດຕາມທິດການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມຂອງອາຊຽນ.

ໃນກອງປະຊຸມ, ກອງເລຂາໄອປາ, ກອງເລຂາອາຊຽນ ແລະ ລັດຖະສະພາສະມາຊິກໄອປາ ໄດ້ຮ່ວມກັນຕີລາຄາຄືນກ່ຽວກັບກົນໄກ ແລະວິທີການຕ່າງໆ ໃນການພົວພັນປະສານງານໃຫ້ມີປະສິດທິພາບສູງກວ່າເກົ່າ, ພ້ອມກັນຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ 2025 ແລະ ຫຼັງປີ 2025 ກໍຄືສົ່ງເສີມປະຊາຄົມອາຊຽນໃຫ້ມີການເຊື່ອມໂຍງ ແລະ ເຊື່ອມຈອດຢ່າງເປັນຮູບປະທຳ.

**(ນາງ ອາລິນ ສຸພົມມະປະດິດ)**

# ກວດກາເນື້ອໃນຮອບດ້ານກົດໝາຍທີ່ຢູ່ອາໄສ



(ສພຊ) - ວັນທີ 8 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍທີ່ຢູ່ອາໄສ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ມີບັນດາທ່ານປະທານ-ຮອງປະທານກຳມາທິການ ສພຊ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະທີ່ປຶກສາທາງດ້ານກົດໝາຍ ຂອງຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ໄຊສົງຄາມ ມະໂນທັມ ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງໄດ້ແຈ້ງໃຫ້ທີ່ປະຊຸມຊາບວ່າ: ຜ່ານການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງວຽກງານທີ່ຢູ່ອາໄສໃນໄລຍະຜ່ານມາ ຍັງພົບຄວາມຫຍຸ້ງຍາກ ແລະ ມີຫຼາຍບັນຫາ ເນື່ອງຈາກວ່າບໍ່ທັນມີກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຄຸ້ມຄອງສະເພາະວຽກງານທີ່ຢູ່ອາໄສ; ຍັງບໍ່ທັນມີການຂຶ້ນທະບຽນ, ເກັບກຳຂໍ້ມູນສະຖິຕິ, ສ້າງຖານຂໍ້ມູນທີ່ຢູ່ອາໄສ ເພື່ອຄຸ້ມຄອງໃຫ້ເປັນລະບົບ, ລວມສູນ ເປັນເອກະພາບໃນຂອບເຂດທົ່ວປະເທດ ເພື່ອເປັນພື້ນຖານໃຫ້ແກ່ລັດໃນການສ້າງນະໂຍບາຍ, ການຂຸດຄົ້ນແຫຼ່ງລາຍຮັບຕາມຄວາມເໝາະສົມ ແລະ ສອດຄ່ອງໃນແຕ່ລະໄລຍະ; ທີ່ຢູ່ອາໄສຈຳນວນໜຶ່ງຍັງບໍ່ທັນໄດ້ມາດຕະຖານເຕັກນິກ, ບໍ່ທັນມີລະບົບສຸຂາພິບານທີ່ດີ ແລະ ຍັງຂາດພື້ນຖານໂຄງລ່າງທາງດ້ານເຕັກນິກ ແລະ ສັງຄົມ, ສິ່ງອຳນວຍຄວາມສະດວກຕ່າງໆ ; ຍັງບໍ່ທັນມີກົນໄກການຄຸ້ມຄອງວຽກງານທີ່ຢູ່ອາໄສຈຶ່ງເປັນເຫດຜົນ ແລະ ຄວາມຈຳເປັນໃນການສ້າງຮ່າງກົດໝາຍວ່າດ້ວຍທີ່ຢູ່ອາໄສ ເຊິ່ງຮ່າງກົດໝາຍສະບັບນີ້ ມີ 11 ພາກ, 06 ໝວດ ແລະ 67 ມາດຕາ.

ອ່ານຕໍ່ໜ້າ 11

## ຖອດຖອນບົດຮຽນການປະສານງານຂອງ 4 ພາກສ່ວນ



(ສພຊ) - ວັນທີ 15 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມຖອດຖອນບົດຮຽນການ ຈັດຕັ້ງປະຕິບັດວຽກງານປະສານງານຂອງ 4 ພາກສ່ວນ (ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະສະຫະພັນນັກຮົບເກົ່າແຫ່ງຊາດ) ໃນໄລຍະແຕ່ກອງປະຊຸມຄັ້ງປະຖົມມະລຶກຫາກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ແລະ ທິດທາງແຜນການຮອດທ້າຍປີ 2025 ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີປະທານ-ຮອງປະທານກຳມາທິການສພຊ, ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຕາງໜ້າຄະນະປະສານງານກະຊວງປ້ອງກັນຄວາມສະຫງົບ, ຮອງປະທານສະຫະພັນນັກຮົບເກົ່າແຫ່ງຊາດ ພ້ອມດ້ວຍຕາງໜ້າຈາກຄະນະເລຂາທິການ ແລະ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຫ້ອງການຄະນະກຳມະການ ປກຊ-ປກສ ສູນກາງ ແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອເປັນການສະຫຼຸບຕີລາຄາດ້ານດີ, ດ້ານອ່ອນ ແລະຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດວຽກງານປະສານງານຂອງ 4 ພາກສ່ວນ ທັງເຮັດໃຫ້ຄະນະປະສານງານຊຸດໃໝ່ຂອງ 2 ກະຊວງ ຮັບຮູ້, ເຂົ້າໃຈ ແລະ ກຳໄດ້ບັນດາວຽກງານປະສານງານຂອງ 4 ພາກສ່ວນໃນໄລຍະຜ່ານມາ ແລະ ກຽມພ້ອມສືບຕໍ່ໃຫ້ການຮ່ວມມືໃນການປະສານງານໃນຕໍ່ໜ້າ ໃຫ້ໄດ້ຮັບຜົນດີ, ມີປະສິດທິຜົນສູງ ແລະ ຮັບປະກັນຄວາມເປັນເອກະພາບກ່ຽວກັບແຜນການປະສານງານແຕ່ນີ້ຮອດທ້າຍປີ 2025.

ກອງປະຊຸມໄດ້ຮັບຟັງບົດສະຫຼຸບການຈັດຕັ້ງປະຕິບັດວຽກງານປະສານງານໃນໄລຍະແຕ່ກອງປະຊຸມຄັ້ງປະຖົມມະລຶກຫາກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ແລະ ທິດທາງແຜນການແຕ່ນີ້ຮອດທ້າຍປີ2025; ບົດຄຳເຫັນຂອງຄະນະປະສານງານກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດ ຕໍ່ສະພາບການປະສານງານໃນໄລຍະຜ່ານມາ. ຈາກນັ້ນ, ໄດ້ມີການແລກປ່ຽນຄຳຄິດຄຳເຫັນ, ຂໍ້ສະເໜີຢ່າງກົງໄປກົງມາ ເຊິ່ງເປັນການຢັ້ງຢືນໃຫ້ເຫັນດ້ານດີ-ຜົນງານທີ່ຄະນະປະສານງານ4ພາກສ່ວນຍາດມາໄດ້ໃນໄລຍະຜ່ານມາ ທັງສ່ອງແສງໃຫ້ເຫັນບັນຫາດ້ານອ່ອນ-ຄົງຄ້າງ ຢ່າງມີພາວະວິໄສ ແລະ ສະເໜີທິດທາງ, ວິທີການ, ມາດຕະການ ເພື່ອປັບປຸງບັນຫາທີ່ຍັງຄົງຄ້າງໃຫ້ດີຂຶ້ນໃນຕໍ່ໜ້າ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນເນັ້ນໜັກໃຫ້ເອົາໃຈໃສ່ຄົ້ນຄວ້າແລະຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງຮ່ວມກັນ ໂດຍຫັນມາເປັນແຜນວຽກລະອຽດ ທັງມີການປະສານງານກັນຢ່າງກົມກຽວແຕ່ຫົວທີເພື່ອເປັນການປັບປຸງ, ກໍ່ສ້າງກອງກຳລັງ ແລະ ການຈັດຕັ້ງ ໃຫ້ປອດໃສ, ເຂັ້ມແຂງແລະໜັກແໜ້ນ; ເອົາໃຈໃສ່ພົວພັນປະສານງານໃນການຄົ້ນຄວ້າ, ວິເຄາະວິໄຈ ແລະ ແລກປ່ຽນຂໍ້ມູນຂ່າວສານ, ສະພາບການພົ້ນເດັ່ນ ຢ່າງປົກກະຕິ ດ້ວຍຫຼາຍວິທີ-ຮູບການ ຮັບປະກັນຄຸນນະພາບ, ທັນຕາມກຳນົດເວລາ ເພື່ອຄົ້ນຄວ້າວິທີການຕອບໂຕ້ ແລະ ແກ້ໄຂຢ່າງຖືກຕ້ອງ, ທັນການ ; ເປັນເຈົ້າການຮ່ວມກັນເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ການເຄື່ອນໄຫວວຽກງານປະສານງານ ເພື່ອເປັນຂົວຕໍ່ໂດຍກົງໃນເວລາເຄື່ອນໄຫວວຽກງານ ຕິດພັນກັບການຍົກລະດັບຄວາມຮູ້, ຄວາມສາມາດ, ຄວາມຊຳນານທາງດ້ານກົດໝາຍ ແລະວິຊາສະເພາະເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງວຽກງານ;ປັບປຸງກົນໄກປະສານງານ, ແບບແຜນວິທີເຮັດວຽກ ກໍຄືແບບແຜນການປະສານງານເຊິ່ງກັນແລະ ກັນ, ສ້າງຄວາມເຂົ້າໃຈທີ່ຖືກຕ້ອງຮ່ວມກັນ, ຈຳກັດ ແລະ ອັດຕັນບັນຫາທີ່ເປັນຊ່ອງວ່າງໃຫ້ຫຼຸດລົງ; ເລືອກເຟັ້ນເອົາບຸຄະລາກອນທີ່ຈະມາປະຈຳການປະຕິບັດໜ້າທີ່ ຢູ່ສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ຕ້ອງໃຫ້ໄດ້ຜູ້ທີ່ມີຄຸນທາດການເມືອງທີ່ໜັກແໜ້ນ, ມີແບບແຜນດຳລົງຊີວິດທີ່ປອດໃສ, ມີສະຕິຕໍ່ການຈັດຕັ້ງເຂັ້ມງວດ ແລະ ມີຄວາມຮູ້ຄວາມສາມາດໃນລະດັບທີ່ແນ່ນອນ.

**(ນາງ ອາລິນ ສຸພົມມະປະດິດ)**

## ຍົກສູງຄວາມຮູ້ວຽກງານບໍລິຫານ ແລະ ພິທີການ



(ສພຊ) - ວັນທີ 15 ຕຸລາຜ່ານມາທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມເຝິກອົບຮົມຍົກສູງຄວາມຮູ້ທາງດ້ານວຽກງານບໍລິຫານ ແລະ ພິທີການ ໃຫ້ແກ່ພະນັກງານ LOs/VOs (ຜູ້ປະສານງານ) ເພື່ອກະກຽມຮັບໃຊ້ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໂດຍການເປັນປະທານຂອງທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ, ມີບັນດາຄະນະກົມ, ກອງເລຂາຊ່ວຍວຽກ ແລະ ພະນັກງານ LOs/VOs ເຂົ້າຮ່ວມ 95 ທ່ານ.

ໃນຄຳເຫັນກ່າວເປີດ, ທ່ານ ປອ. ອາຄົມ ປຣະເສີດ ໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ແລະ ທັກສະຕ່າງໆ ກ່ຽວກັບການກະກຽມຄວາມພ້ອມໃຫ້ແກ່ພະນັກງານຮັບໃຊ້ກອງປະຊຸມ ແລະ ພະນັກ

ອ່ານຕໍ່ໜ້າ 12

## ມອບເງິນສົດ ແລະ ສິນຄ້າໂອດ້ອບ ສະໜັບສະໜູນກອງປະຊຸມໄອປາ




(ສພຊ) - ຕອນເຊົ້າວັນຈັນທີ 14 ຕຸລາຜ່ານມາ ໄດ້ມີການມອບ-ຮັບເງິນສົດ 1 ຕື້ກີບ ຈາກ ບໍລິສັດ ອາຊີ-ໂປຕາສ ສາກົນ ແລະ ບໍລິສັດ ຊີໂນ-ອາກຣິໂປຕາສ ຈຳກັດ ແລະ ສິນຄ້າໂອດ້ອບ (ກາເຟ, ໂສມສະກັດເຫັດຫຼິນຈື່ ແລະ ເຄື່ອງຫັດຖະກຳພື້ນເມືອງ) ຈາກອົງການປົກຄອງແຂວງ ແລະ ສະພາປະຊາຊົນແຂວງ (ສພຂ) ເຊກອງ ລວມມູນຄ່າ 55.15 ລ້ານກີບ ໃຫ້ແກ່ສະພາແຫ່ງຊາດ ເພື່ອສະໜັບສະໜູນກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ເຊິ່ງຕາງໜ້າກ່າວຮັບເງິນສົດໂດຍທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ຕາງໜ້າກ່າວມອບໂດຍຮອງຜູ້ອຳນວຍການຂອງ 2 ບໍລິສັດດັ່ງກ່າວ ແລະ ຕາງໜ້າກ່າວມອບສິນຄ້າໂອດ້ອບ ໂດຍທ່ານ ດົງເຜີດ ພະຍົນ ປະທານ ສພຂ ເຊກອງ, ຕາງໜ້າກ່າວຮັບໂດຍທ່ານ ນາງ ປານຄຳ ຂະຫຍອງເອກ ຫົວໜ້າສູນເຝິກອົບຮົມ ແລະຂໍ້ມູນຂ່າວສານເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

**(ສອນສັກ ວັນວິໄຊ)**

## ຫຼາຍພາກສ່ວນສະໜັບສະໜູນກອງປະຊຸມໄອປາ




(ສພຊ) - ຕອນເຊົ້າວັນທີ 17 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເງິນສະໜັບສະໜູນການເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຈາກທະນາຄານພົງສະຫວັນ 300 ລ້ານກີບ, ບໍລິສັດທີ່ປຶກສາໄຂ່ມຸກຕາເວັນອອກຈຳກັດ200 ລ້ານກີບ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 10 ລ້ານກີບ ແລະ ນ້ຳດື່ມ 100 ແກັດ ມູນຄ່າ 3.4 ລ້ານກີບ ໂດຍການກ່າວຮັບຂອງທ່ານ ດຣ. ນາງ ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ເຊິ່ງກ່າວມອບມີທ່ານ ສີວິໄລ ພົມມະຈັກ ຜູ້ອຳນວຍການໃຫຍ່ທະນາຄານພົງສະຫວັນ, ທ່ານ ຄອນປະເສີດ ຫຼວງສຸວັນນະວົງ ຫົວໜ້າພະແນກການຕະຫຼາດ ແລະ ບໍລິການລູກຄ້າລາຍໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທ່ານນາງ ຈຽງຄຳເທຍໄກສອນ ຕາງໜ້າປະທານບໍລິສັດທີ່ປຶກສາໄຂ່ມຸກຕາເວັນອອກ ຈຳກັດ; ທ່ານ ດຣ. ນາງ ວິພາວັນ ພົມວິຫານ ໄດ້ສະແດງຄວາມຂອບໃຈ ແລະມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ເພື່ອເປັນການຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳໃນຄັ້ງນີ້.

ຕອນເຊົ້າວັນດຽວກັນ, ທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດກໍໄດ້ຮັບເງິນສະໜັບສະໜູນກອງປະຊຸມໄອປາ 5ແສນບາດ ຈາກບໍລິສັດ GULF Energy Development Public Company Limited, ທ່ານ ສຸບັນສະວະບຸດ ໄດ້ສະແດງຄວາມຂອບໃຈ ແລະ ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ເພື່ອເປັນການຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳໃນຄັ້ງນີ້.

ຕອນບ່າຍວັນທີ 18 ຕຸລາຜ່ານມາ ກໍໄດ້ມີພິທີມອບ-ຮັບເຄື່ອງສິນຄ້າໂອດ້ອບຄື: ຊາ 5 ແກັດ ແລະ ກາເຟ 3 ແກັດ ມູນຄ່າ 14.8 ລ້ານກີບ ເພື່ອຮັບໃຊ້ກອງປະຊຸມ AIPA-45 ເຊິ່ງກ່າວມອບໂດຍທ່ານ ວິລະກອນ ອິນດາວົງ ຕາງໜ້າສະພາປະຊາຊົນແຂວງສາລະວັນ, ກ່າວຮັບໂດຍທ່ານປອ. ອາຄົມປຣະເສີດຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍພະນັກງານທັງສອງຝ່າຍເຂົ້າຮ່ວມ; ທ່ານ ອາຄົມ ປຣະເສີດ ໄດ້ກ່າວຄຳຂອບໃຈຕໍ່ສະພາປະຊາຊົນແຂວງສາລະວັນທີ່ໄດ້ປະກອບສ່ວນສຳຄັນ ແລະ ສະໜັບສະໜູນຜະລິດຕະພັນທີ່ມີຄວາມເປັນເອກະລັກສະເພາະ ແລະ ຜະລິດຢູ່ພາຍໃນແຂວງສາລະວັນທີ່ສາມາດຈັດເປັນເຄື່ອງຕ້ອນຂອງຝາກໃຫ້ແກ່ຜູ້ແທນຕ່າງປະເທດທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ພ້ອມທັງມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ເພື່ອເປັນການຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳ.

**(ສອນສັກ ວັນວິໄຊ)**

## ອົງການນິຕິບັນຍັດ ລາວ-ການາດາ ພົບປະສອງຝ່າຍ



(ສພຊ) - ເພື່ອຊຸກຍູ້ເພີ່ມທະວີສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງ ສປປລາວ-ການາດາ ກໍຄືສອງອົງການນິຕິບັນຍັດຂອງສອງປະເທດ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງໆຂຶ້ນ; ວັນທີ 18 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນແລະການກວດສອບ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ການາດາ ພ້ອມດ້ວຍຄະນະ ໄດ້ພົບປະແລະເຮັດວຽກຮ່ວມກັບທ່ານ Yeua Pua woo ສະມາຊິກວຸດທິສະພາ ແຫ່ງລັດຖະສະພາການາດາ ພ້ອມດ້ວຍຄະນະ ໃນໂອກາດທີ່ມາເຂົ້າຮ່ວມກອງປະຊຸມໄອປາ ຄັ້ງທີ 45.

ໃນການພົບປະ, ສອງຝ່າຍໄດ້ພ້ອມກັນຕີລາຄາຄືນການພົວພັນ ແລະຮ່ວມມືທີ່ດີນຳກັນລະຫວ່າງສະພາແຫ່ງຊາດລາວ ແລະລັດຖະສະພາການາດາເຊິ່ງມີການແລກປ່ຽນຂໍ້ມູນຂ່າວສານ, ສົ່ງສານອວຍພອນ, ສານຊົມເຊີຍ ໃນໂອກາດວັນສຳຄັນຕ່າງໆພ້ອມທັງມີການຮ່ວມມື ແລະສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນເປັນຕົ້ນAIPA,IPU,APPF ແລະ ອົງການອື່ນໆ. ພ້ອມກັນນັ້ນ, ກໍສະເໜີໃຫ້ສອງອົງການນິຕິບັນຍັດ ມີການແລກປ່ຽນຄະນະຜູ້ແທນນຳກັນ ທີ່ຕິດພັນກັບການແລກປ່ຽນປະສົບການທີ່ດີໃນການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດແລະບັນຫາອື່ນໆທີ່ມີຄວາມສົນໃຈຮ່ວມກັນ; ໃຫ້ປະເທດການາດາ ສືບຕໍ່ໃຫ້ການຊ່ວຍເຫຼືອແກ່ ສປປ ລາວ ເປັນຕົ້ນແມ່ນວຽກງານການເກັບກູ້ລະເບີດບໍ່ທັນແຕກ (UXO), ການພັດທະນາຊັບພະຍາກອນມະນຸດ, ສາທາລະນະສຸກ ແລະ ຂົງເຂດອື່ນໆ; ສືບຕໍ່ໃຫ້ການສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ອາລິນ ສຸພົມມະປະດິດ)**

## 2 ກຳມາທິການສະພາແຫ່ງຊາດ ລາວ-ຫວຽດນາມ ພົບປະກັນ

(ສພຊ) - ໃນໂອກາດແຫ່ງການດຳເນີນກອງປະຊຸມໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ(AIPA)ຄັ້ງທີ45, ໃນວັນທີ 18 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ ໄດ້ມີການພົບປະລະຫວ່າງກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ແຫ່ງ ສປປລາວກັບກຳມາທິການວັດທະນະທຳ ແລະ ສຶກສາ ສະພາແຫ່ງຊາດແຫ່ງສສ.ຫວຽດນາມ, ຝ່າຍກຳມາທິການຂອງສະພາແຫ່ງຊາດລາວ ນຳໂດຍສະຫາຍ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ ພ້ອມຄະນະ ແລະ ຝ່າຍ ສສ.ຫວຽດນາມນຳໂດຍສະຫາຍ ຫງວຽນ ດັກ ວິງ ກຳມະການສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ ແລະ ສຶກສາ ພ້ອມຄະນະ ເຊິ່ງການພົບປະໃນຄັ້ງນີ້ ແມ່ນເພື່ອສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນຮ່ວມມືຂອງສອງກຳມາທິການ ກໍຄືສອງສະພາແຫ່ງຊາດ ແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະປະຊາຊົນສອງຊາດ ລາວ-ຫວຽດນາມ ທີ່ມີມູນເຊື້ອຄວາມສາມັກຄີພິເສດ ທີ່ບໍ່ມີປະເທດໃດເໝືອນ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະແຕກດອກອອກຜົນຍິ່ງໆຂຶ້ນ.



ໃນການພົບປະແລະເຮັດວຽກຮ່ວມກັນໃນເທື່ອນີ້, ສອງຝ່າຍໄດ້ເຫັນດີສືບຕໍ່ຈັດຕັ້ງປະຕິບັດເນື້ອໃນຈິດໃຈ ຂອງບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງສອງກຳມາທິການ ກໍຄືສອງສະພາແຫ່ງຊາດ ລາວ-ຫວຽດນາມ ໃຫ້ເປັນຮູບປະທຳຫຼາຍຂຶ້ນຕື່ມ ໂດຍເນັ້ນໜັກໃຫ້ສືບຕໍ່ພົບປະຢ້ຽມຢາມ ແລະເຮັດວຽກຮ່ວມກັນໃຫ້ຫຼາຍຂຶ້ນ ເພື່ອແລກປ່ຽນ ແລະຖອດຖອນບົດຮຽນເຊິ່ງກັນ ແລະ ກັນ ໃນການຄົ້ນຄວ້າ, ວິເຄາະ, ວິໄຈ ໃນຂົງເຂດວັດທະນະທຳ-ສັງຄົມເປັນຕົ້ນວຽກງານສຶກສາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ, ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ໄດ້ຮັບການປັບປຸງໄປສູ່ຄຸນນະພາບໃໝ່ເທື່ອລະກ້າວ; ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງລະຫວ່າງສອງລັດຖະບານ; ສືບຕໍ່ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ໃນການເຄື່ອນໄຫວວຽກງານໃນເວທີລະດັບພາກພື້ນ ແລະ ສາກົນ.

**(ກຳມາທິການວັດທະນະທຳ-ສັງຄົມ)**

## ປະທານກຳມາທິການກົດໝາຍ ພົບປະ ຫົວໜ້າຄະນະຜູ້ແທນລັດຖະສະພາມາຣົກ



(ສພຊ) - ວັນສຸກທີ 18 ຕຸລາຜ່ານມາ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ, ປະທານຄະນະມິດຕະພາບລັດຖະສະພາລາວ-ບັນດາປະເທດອາຊີຕາເວັນຕົກ ພ້ອມດ້ວຍຄະນະ ໄດ້ພົບປະທ່ານ ນາງ ຊັນມາ ເບນາຊິດ (Salma BENAZIZ) ປະທານກຳມາທິການການຕ່າງປະເທດ, ຫົວໜ້າຄະນະຜູ້ແທນລັດຖະສະພາມາຣົກ ພ້ອມດ້ວຍຄະນະ ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ທີ່ ສປປລາວ ເປັນເຈົ້າພາບ.

ໃນການພົບປະ, ສອງຝ່າຍໄດ້ຕີລາຄາສູງຕໍ່ການພົວພັນ ແລະ ຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຜູ້ແທນລາດສະດອນມາຣົກ ທີ່ມີການພົວພັນ ແລະ ຮ່ວມມືນຳກັນ ເຖິງວ່າຈະບໍ່ມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນ, ແຕ່ກໍມີການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ, ສົ່ງສານສະແດງຄວາມຊົມເຊີຍແລະສານອວຍພອນໃນວັນສຳຄັນຕ່າງໆ, ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນໄອປາ, ເວທີລັດຖະສະພາອາຊີ-ປາຊີຟິກ (APPF), ຄູ່ຮ່ວມເຈລະຈາລັດຖະສະພາອາຊີ-ເອີຣົບ (ASEP), ສະຫະພັນລັດຖະສະພາສາກົນ(IPU).ສອງຝ່າຍຍັງໄດ້ສະເໜີບາງທິດທາງແຜນການພົວພັນ ແລະ ຮ່ວມມືໃນຕໍ່ໜ້າ ເປັນຕົ້ນຊຸກຍູ້ໃຫ້ມີການແລກປ່ຽນຄະນະຜູ້ແທນນຳກັນ; ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ກ່ຽວກັບການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ ແລະ ຫົວຂໍ້ອື່ນໆທີ່ສອງຝ່າຍມີຄວາມສົນໃຈ; ຊຸກຍູ້ແລະສົ່ງເສີມໃຫ້ສອງປະເທດ ເພີ່ມທະວີການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ, ການທ່ອງທ່ຽວແລະຂະແໜງການທີ່ສອງປະເທດມີທ່າແຮງນຳກັນ; ສືບຕໍ່ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນການເຄື່ອນໄຫວຢູ່ເວທີລັດຖະສະພາພາກພື້ນ ແລະ ສາກົນ.

ສປປ ລາວ ແລະ ລາຊະອານາຈັກມາຣົກ ສ້າງຕັ້ງສາຍພົວພັນການທູດນຳກັນ ໃນວັນທີ 30 ມັງກອນ 1997.

**(ນາງ ກຸກກິກ ບຸດດາໄຊ)**

## ກຳມາທິການສະພາແຫ່ງຊາດລາວ-ກຳປູເຈຍພົບປະສອງຝ່າຍ



(ສພຊ) - ວັນສຸກທີ 18 ຕຸລານີ້ທີ່ຫໍປະຊຸມແຫ່ງຊາດ ໄດ້ມີການພົບປະສອງຝ່າຍລະຫວ່າງຄະນະຜູ້ແທນສະພາແຫ່ງຊາດ ສປປ ລາວ ແລະ ຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ລາຊະອານາຈັກກຳປູເຈຍ ເຊິ່ງຝ່າຍລາວນຳໂດຍທ່ານບຸນຕາເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ, ຝ່າຍກຳປູເຈຍນຳໂດຍທ່ານ ນາງ ລ້ອກ ເຄັງ ປະທານກຳມາທິການສາທາລະນະສຸກ, ວຽກງານສັງຄົມ, ນັກຮົບເກົ່າ, ການຟື້ນຟູຊາວໜຸ່ມ, ແຮງງານ, ວິຊາຊີບ, ວຽກງານແມ່ຍິງ.

ໃນການພົບປະ,ສອງຝ່າຍໄດ້ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ແລະ ຈຸດພິເສດພົ້ນເດັ່ນໃຫ້ກັນແລະກັນຊາບ ພິເສດແມ່ນຜົນການຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈຳທີ່ສອງກຳມາທິການໄດ້ລົງນາມຮ່ວມກັນໃນເດືອນມັງກອນ 2009 ທີ່ນະຄອນຫຼວງວຽງຈັນ ເພື່ອຮັດແໜ້ນ ແລະເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງກຳມາທິການວັດທະນະທຳ-ສັງຄົມ, ສະພາແຫ່ງຊາດລາວ ແລະກຳມາທິການສາທາລະນະສຸກ, ສະຫວັດດີການສັງຄົມ-ນັກຮົບເກົ່າ, ຟື້ນຟູຊາວໜຸ່ມ, ແຮງງານ, ບຳລຸງວິຊາຊີບ ແລະ ວຽກງານແມ່ຍິງ, ສະພາແຫ່ງຊາດກຳປູເຈຍ. ໃນຕອນທ້າຍ, ສອງຝ່າຍສະເໜີທິດທາງການພົວພັນຮ່ວມມືໃນຕໍ່ໜ້າ ໂດຍສືບຕໍ່ຄົ້ນຄວ້າສ້າງບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງສອງສະພາແຫ່ງຊາດ ລາວ-ກຳປູເຈຍ ກໍຄືສອງກຳທິການ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານການພົວພັນຮ່ວມມືໃນຕໍ່ໜ້າ; ເພີ່ມທະວີການແລກປ່ຽນຢ້ຽມຢາມ, ພົບປະຮັດວຽກລົງເລິກບາງບັນຫາທີ່ສອງກຳມາທິການມີຄວາມສົນໃຈ; ສືບຕໍ່ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນການເຄື່ອນໄຫວວຽກງານໃນເວທີລະດັບພາກພື້ນ ແລະ ສາກົນ.

**(ນາງ ອາລິນ ສຸພົມມະປະດິດ)**

## ປະທານກຳມາທິການວັດທະນະທຳ-ສັງຄົມ ຕ້ອນຮັບລັດຖະມົນຕີກະຊວງການທ່ອງທ່ຽວ ແລະ ກິລາ ແຫ່ງ ລາຊະອານາຈັກໄທ



(ສພຊ) - ຕອນບ່າຍວັນທີ 18 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ບຸນຕາ ເທບພະວົງ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບທ່ານ ສໍຣະວົງ ທຽນທອງ ລັດຖະມົນຕີວ່າການກະຊວງການທ່ອງທ່ຽວ ແລະ ກິລາ ພ້ອມດ້ວຍສະມາຊິກສະພາຜູ້ແທນລາດສະດອນປະຈຳຈັງຫວັດໜອງຄາຍ ແຫ່ງລາຊະອານາຈັກໄທ ໃນໂອກາດທີ່ມາຢ້ຽມຢາມ ແລະ ປະຕິບັດລັດຖະກິດຢູ່ສປປ ລາວ ເຊິ່ງການພົບປະເຮັດວຽກສອງຝ່າຍໃນຄັ້ງນີ້ ມີເນື້ອໃນ ແລະ ຄວາມສຳຄັນຕໍ່ການຮ່ວມມືຫຼາຍໆດ້ານ ໂດຍສະເພາະວຽກງານການທ່ອງທ່ຽວ ແລະ ກິລາ ໃນການຮ່ວມມືໃນຕໍ່ໜ້າຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສອງພາກສ່ວນກໍຄືສອງປະເທດລາວ-ໄທ.

**(ກຳມາທິການວັດທະນະທຳ-ສັງຄົມ)**

## ປະທານ ກວທສ ພົບປະຜູ້ອຳນວຍການອົງການອາຫານໂລກ



(ສພຊ) - ຕອນບ່າຍວັນທີ 14 ຕຸລາຜ່ານມາ, ທ່ານ ບຸນຕາ ເທບພະວົງ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ໄດ້ຕ້ອນຮັບແລະພົບປະກັບທ່ານ ມາກ-ອານເດຣ ໂປຣສ (Marc-Andre Prost) ຜູ້ອຳນວຍການອົງການອາຫານໂລກ ປະຈຳ ສປປ ລາວ ເພື່ອປຶກສາຫາລືວຽກງານການຊຸກຍູ້, ຊ່ວຍເຫຼືອ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສອງພາກສ່ວນ.

ທ່ານບຸນຕາເທບພະວົງ ໄດ້ລາຍງານໂດຍສັງເຂບກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການວັດທະນະທຳ-ສັງຄົມ ພ້ອມທັງແຈ້ງໃຫ້ຊາບວຽກງານຈຸດສຸມຂອງກຳມາທິການໃນປັດຈຸບັນ ເປັນຕົ້ນ ການເຂົ້າຮ່ວມ ແລະ ຮັບໃຊ້ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45 ທີ່ຈະດຳເນີນໃນວັນທີ 17-24 ຕຸລານີ້ ທີ່ນະຄອນຫຼວງວຽງຈັນ ໂດຍຮັບຜິດຊອບການເປັນປະທານກອງປະຊຸມກຳມາທິການວຽກງານສັງຄົມ ເຊິ່ງຈະຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາມະຕິຂອງກອງປະຊຸມດັ່ງກ່າວ ຈຳນວນ 5 ສະບັບ.

ທ່ານ ມາກ-ອານເດຣ ໂປຣສ ໄດ້ລາຍງານໃຫ້ຊາບເຖິງພາລະບົດບາດ ແລະ ໜ້າທີ່ຂອງອົງການອາຫານໂລກ, ການຮ່ວມມືແລະສະໜັບສະໜູນຂະແໜງການຕ່າງໆຢູ່ ສປປ ລາວ ເພື່ອຊ່ວຍໃຫ້ຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ເຊິ່ງອົງການອາຫານໂລກໄດ້ວາງ 4 ເປົ້າໝາຍຍຸດທະສາດ ເປັນຕົ້ນ ເສີມຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແຜນງານອາຫານທ່ຽງຂອງລັດຖະບານ, ສະໜັບສະໜູນວຽກງານປ້ອງກັນການຂາດໂພຊະນາການ,ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນໃນເຂດທີ່ມີຄວາມສ່ຽງຕໍ່ການເກີດໄພພິບັດ ໂດຍການເພີ່ມຄວາມອາດສາມາດໃນການປັບຕົວຕໍ່ການປ່ຽນແປງຂອງອາກາດແລະການຄຸ້ມຄອງໄພພິບັດ, ສະໜັບສະໜູນລັດຖະບານໃນການຊ່ວຍເຫຼືອສຸກເສີນຕໍ່ໄພພິບັດ; ທ່ານແຈ້ງໃຫ້ຊາບອີກວ່າ: ອົງການອາຫານໂລກ ໄດ້ຮ່ວມມືກັບລັດຖະບານລາວ ແລະ ພາກສ່ວນຕ່າງໆ ສືບຕໍ່ສະໜັບສະໜູນ ແລະຊຸກຍູ້ສົ່ງເສີມໃນການແກ້ໄຂບັນຫາດ້ານໂພຊະນາການ, ການຄ້ຳປະກັນສະບຽງອາຫານ ແລະ ການເຂົ້າເຖິງການສຶກສາ, ສາທາລະນະສຸກ ຂອງປະຊາຊົນບັນດາເຜົ່າໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ຕິດພັນກັບຜະລິດກະສິກຳ ເພື່ອເຮັດໃຫ້ປະຊາຊົນ ແລະ ເດັກນ້ອຍໃນເຂດດັ່ງກ່າວໄດ້ມີໂພຊະນາການທີ່ດີຂຶ້ນ.

ໃນຕອນທ້າຍ, ທັງສອງຝ່າຍໄດ້ຕົກລົງໃຫ້ມີການສືບຕໍ່ຜັນຂະຫຍາຍຜົນຂອງການພົບປະຄັ້ງນີ້ ໃຫ້ເກີດດອກອອກຜົນ ແລະ ເປັນຮູບປະທຳ; ທ່ານປະທານ ກວທສ ຍັງໄດ້ສະເໜີແຕ່ງຕັ້ງໜ່ວຍງານຜູ້ປະສານງານຂອງທັງສອງຝ່າຍ ເພື່ອເຮັດວຽກການວາງແຜນດ້ານວິຊາການ ໂດຍສະເພາະການເສີມຂະຫຍາຍສາຍພົວພັນໃຫ້ມີຄວາມໃກ້ຊິດແລະສະໜິດສະໜົມ, ຊຸກຍູ້ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ສ້າງຄວາມເຂັ້ມແຂງໃນການປະຕິບັດວຽກງານຕ່າງໆ.

**(ນາງ ອາລິນ ສຸພົມມະປະກິດ)**

## ມອບເງິນສະໜັບສະໜູນກອງປະຊຸມໄອປາ




(ສພຊ) - ຕອນເຊົ້າວັນທີ 15 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເງິນສະໜັບສະໜູນການເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຈາກບໍລິສັດ ພີທີແອວ ໂຮນດິງ (PTLHolding) 300ລ້ານກີບ, ສູນການແພດເວດສະພົງ 100 ລ້ານກີບ, ກຸ່ມບໍລິສັດ ຕັງຈະເລີນ ຈຳກັດ 20 ລ້ານກີບ ໂດຍການກ່າວຮັບຂອງທ່ານ ປອ. ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງກ່າວມອບມີທ່ານ ສີລາ ວຽງແກ້ວ ຮອງປະທານກຳມະການວຽກງານການຄ້າ ແລະກົດໝາຍຂອງບໍລິສັດ ພີທີແອວ ໂຮນດິງ ຈຳກັດ, ທ່ານ ປອ. ນາງ ວາລີ ເວດສະພົງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ1 ນະຄອນຫຼວງວຽງຈັນ, ທ່ານ ຄຳໄຕ ແກ້ວດວງດີ ຮອງອຳນວຍການກຸ່ມບໍລິສັດ ຕັງຈະເລີນ ຈຳກັດ.

ທ່ານ ປອ. ບຸນທັນ ບຸນວິໄລ ໄດ້ສະແດງຄວາມຂອບໃຈ ແລະມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ເພື່ອເປັນການຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳໃນຄັ້ງນີ້.

ແລະໃນວັນທີ 16 ຕຸລານີ້, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດກໍໄດ້ຮັບເງິນສະໜັບສະໜູນກອງປະຊຸມໄອປາ100ລ້ານກີບ ຈາກເຂດເສດຖະກິດພິເສດ ສະຫວັນ ພາກ (SAVAN Park).

**(ນາງ ອາລິນ ສຸພົມມະປະກິດ)**



## ກອງປະຊຸມພົບປະກອງເລຂາແຫ່ງຊາດ




(ສພຊ) - ເພື່ອຟັງການແນະນຳກ່ຽວກັບການເຂົ້າຮ່ວມກອງປະຊຸມ ໂດຍສະເພາະລາຍລະອຽດດ້ານບໍລິຫານ, ພິທີການ, ພາຫະນະ, ຄວາມປອດໄພ, ສິ່ງອຳນວຍຄວາມສະດວກ ແລະ ອື່ນໆ; ວັນທີ 18 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ ໄດ້ມີກອງປະຊຸມພົບປະກັບກອງເລຂາແຫ່ງຊາດຂອງລັດຖະສະພາສັງເກດການໄອປາ ແລະ ລັດຖະສະພາສະມາຊິກໄອປາ ໂດຍການເປັນປະທານຂອງທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ນາງ ຊິຕິ ໂຣໄຊເມຣິຢັນຕີ ດາໂຕະ ຮາຈິ ອັບດຸນ ຣາມັນ (Siti Rozaimeriyanty Haji Abdul Rahman) ເລຂາທິການໃຫຍ່ໄອປາ, ບັນດາເລຂາຄະນະຜູ້ແທນລັດຖະສະພາສະມາຊິກໄອປາແລະເລຂາຄະນະຜູ້ແທນລັດຖະສະພາສັງເກດການໄອປາ ພ້ອມດ້ວຍແຂກຖືກເຊີນ.

ໃນກອງປະຊຸມ ໄດ້ມີການແນະນຳ ແລະ ແຈ້ງຂໍ້ມູນກ່ຽວກັບວັນ, ເວລາ ແລະ ສະຖານທີ່ຈັດກອງປະຊຸມ, ສະຖານທີ່ພັກເຊົາ, ການສະໜອງພາຫະນະແລະພະນັກງານປະສານງານ, ພາສາທາງການແລະຕູ້ແປພາສາທີ່ນຳໃຊ້ໃນກອງປະຊຸມ, ການກຳນົດເວລາສຳລັບການປະກອບຄຳເຫັນ, ຕາຕະລາງດຳເນີນກອງປະຊຸມແລະບັນດາວຽກງານປິ່ນອ້ອມຕ່າງໆ; ຈາກນັ້ນ, ກໍມີການປະກອບຄຳເຫັນ, ປຶກສາຫາລືແລກປ່ຽນກັນ.

**(ນາງ ອາລິນ ສຸພົມມະປະກິດ)**



## ປະທານ...

(ຕໍ່ຈາກໜ້າ 1)

ຫຼື ໄອປາ (AIPA) ຄັ້ງທີ 45.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ພ້ອມທັງຕີລາຄາສູງຕໍ່ການພົບປະແລະການເຂົ້າຮ່ວມກອງປະຊຸມໄອປາຄັ້ງນີ້ ເຊິ່ງປີນີ້ແມ່ນຄົບຮອບ 50 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ລາວ-ສິງກະໂປ (02/12/1974-02/12/2024) ເປັນການປະກອບສ່ວນເສີມຂະຫຍາຍ ແລະ ຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີລະຫວ່າງສອງປະເທດ ລາວ-ສິງກະໂປ ກໍຄືລະຫວ່າງສອງອົງການນິຕິບັນຍັດໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ; ພ້ອມກັນນັ້ນ, ຍັງເປັນການສະໜັບສະໜູນ ແລະ ໃຫ້ກຳລັງໃຈແກ່ສະພາແຫ່ງຊາດລາວ ເຮັດສຳເລັດພັນທະສາກົນໃນການເປັນປະທານໄອປາ ກໍຄືເປັນເຈົ້າພາບກອງປະຊຸມໃຫຍ່ໄອປາຄັ້ງທີ45.

ໃນການພົບປະ, ສອງຝ່າຍໄດ້ພ້ອມກັນຕີລາຄາຄືນການພົວພັນ ແລະ ຮ່ວມມືທີ່ດີນຳກັນມາ ໂດຍຕະຫຼອດລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາສິງກະໂປ ເຊິ່ງສະແດງອອກມີການແລກປ່ຽນຄະນະຜູ້ແທນຢ້ຽມຢາມເຊິ່ງກັນແລະກັນຢ່າງປົກກະຕິ; ນອກນັ້ນ, ສອງຝ່າຍກໍໄດ້ມີການແລກປ່ຽນບົດຮຽນດ້ານຂໍ້ມູນຂ່າວສານ, ການແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດບົດບາດດ້ານນິຕິບັນຍັດ, ການພັດທະນາເສດຖະກິດ, ການລົງທຶນ, ການຄຸ້ມຄອງສະພາບແວດລ້ອມ. ສອງປະທານຂອງອົງການນິຕິບັນຍັດ ໄດ້ມີການສົ່ງສານຊົມເຊີຍ-ສານອວຍພອນເຊິ່ງກັນແລະກັນ ໃນໂອກາດວັນສຳຄັນຕ່າງໆຂອງ 2 ປະເທດ; ພ້ອມທັງຮ່ວມມືສະໜັບສະໜູນ ແລະຊ່ວຍເຫຼືອເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນເວທີ AIPA, IPU, APPF ແລະ ອົງການອື່ນໆ. ພ້ອມກັນນັ້ນ, ສອງຝ່າຍໄດ້ສະເໜີສືບຕໍ່ແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາສິງກະໂປ; ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ແລະ ຮ່ວມກັນສຳມະນາ-ເຝິກອົບຮົມໃນຫົວຂໍ້ຕ່າງໆທີ່ສອງຝ່າຍມີຄວາມສົນໃຈ; ຮ່ວມກັນຊຸກຍູ້ໃຫ້ລັດຖະບານຂອງ2 ປະເທດ ສືບຕໍ່ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ບັນດາໂຄງການຮ່ວມມື ແລະ ໂຄງການລົງທຶນຕ່າງໆທີ່ສອງປະເທດໄດ້ລົງນາມຮ່ວມກັນ ໃຫ້ມີປະສິດທິພາບແລະປະສິດທິຜົນດີ; ສືບຕໍ່ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ອາລິນ ສຸພົມມະປະກິດ)**

# ກຳມາທິການຍຸຕິທຳ ແລະ ຄະນະຄຳຮ້ອງຂອງປະຊາຊົນ ພົບປະສອງຝ່າຍ



(ສພຊ) - ຕອນເຊົ້າວັນສຸກທີ 18 ຕຸລາຜ່ານມາ ທີ່ຫໍປະຊຸມແຫ່ງຊາດ ໄດ້ມີການພົບປະສອງຝ່າຍລະຫວ່າງຄະນະຜູ້ແທນສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ, ຝ່າຍລາວນຳໂດຍສະຫາຍ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ ແລະ ຝ່າຍຫວຽດນາມນຳໂດຍສະຫາຍ ເຢື່ອງ ແທັງ ບິ່ງ (Dương Thanh Bình) ຫົວໜ້າຄະນະຄຳຮ້ອງຂອງປະຊາຊົນ.

ສະຫາຍ ນາງ ທຸມມາລີ ວົງພະຈັນ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ຜົນສຳເລັດການຮ່ວມມື 2 ຝ່າຍ ແລະ ແຈ້ງສະພາບການພົ້ນເດັ່ນຂອງ ສປປ ລາວ ແລະ ຂອງສະພາແຫ່ງຊາດລາວໂດຍຫຍໍ້; ຈາກນັ້ນ, ສະຫາຍຍັງໄດ້ຢັ້ງຢືນຕໍ່ການຕີລາຄາຂອງສອງປະທານສະພາແຫ່ງຊາດລາວ ແລະປະທານສະພາແຫ່ງຊາດຫວຽດນາມ ຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ນັບມື້ນັບໜັກແໜ້ນ, ເຂົ້າສູ່ລວງເລິກ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ.

ໃນໂອກາດທີ່ໄດ້ພົບປະກັນຄັ້ງນີ້, ທັງສອງຝ່າຍໄດ້ມີຄຳເຫັນປຶກສາຫາລືແລະແລກປ່ຽນບົດຮຽນເຊິ່ງກັນແລະກັນ ກ່ຽວກັບວຽກງານແກ້ໄຂຄຳຮ້ອງຂອງປະຊາຊົນ ເຊິ່ງຍັງຈະໄດ້ສືບຕໍ່ແລກປ່ຽນຂໍ້ມູນຂ່າວສານ ແລະ ບົດຮຽນກ່ຽວກັບວຽກງານດັ່ງກ່າວລະອຽດນຳກັນໃນຕໍ່ໜ້າ.

ສະຫາຍ ເຢື່ອງ ແທັງ ບິ່ງ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ທັງແຈ້ງໃຫ້ຊາບການຈັດຕັ້ງປະຕິບັດວຽກງານຂອງຕົນ ແລະ ສະພາແຫ່ງຊາດຫວຽດນາມ ທັງຢັ້ງຢືນຈະສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດຫວຽດນາມ-ລາວ ເວົ້າລວມ, ເວົ້າສະເພາະແມ່ນລະຫວ່າງຄະນະຄຳຮ້ອງຂອງປະຊາຊົນ ແລະ ກຳມາທິການຍຸຕິທຳ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີໝາກຜົນ ແລະ ເປັນຮູບປະທຳ.

**(ນາງ ອາລິນ ສຸພົມມະປະກິດ)**

# ປະທານ ກວສຊ - ຫົວໜ້າຄະນະວຽກງານ ສສຊ ຫວຽດນາມ ພົບປະສອງຝ່າຍ

(ສພຊ) - ວັນທີ 18 ຕຸລາຜ່ານມາທີ່ຫໍປະຊຸມແຫ່ງຊາດ ໄດ້ມີການພົບປະສອງຝ່າຍລະຫວ່າງສະຫາຍ ສຸບັນ ສະວະບຸດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ກັບສະຫາຍ ນາງ ຫງວຽນ ແທັງ ຫ້າຍ (Nguyễn Thanh Hải) ກຳມະການສູນກາງພັກກອມມູນິດຫວຽດນາມ, ຄະນະປະຈຳສະພາແຫ່ງຊາດ, ຫົວໜ້າຄະນະວຽກງານສະມາຊິກສະພາແຫ່ງຊາດ ໃນໂອກາດຮ່ວມໃນຄະນະຜູ້ແທນສະພາແຫ່ງຊາດສສ.ຫວຽດນາມ ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ 45 ທີ່ ສປປລາວ ເປັນເຈົ້າພາບ.



ໃນການພົບປະ, ສະຫາຍ ສຸບັນ ສະວະບຸດ ໄດ້ສະເໜີກ່ຽວກັບວຽກງານຂອງ ກວສຊ ຕາມພາລະບົດບາດທີ່ມີ4 ວຽກໃຫຍ່ ຄື: ການຄຸ້ມຄອງສະມາຊິກສະພາແຫ່ງຊາດ (ສສຊ) ໃນນີ້ ກໍມີນະໂຍບາຍຕ່າງໆ, ການບັນຈຸສັບຊ້ອນ ສສຊ ສັງກັດກຳມາທິການ, ການແຕ່ງຕັ້ງຍົກຍ້າຍ; ການພັດທະນາ: ປະສານສົມທົບກັບພາກສ່ວນຕ່າງໆໃນການສ້າງຄວາມເຂັ້ມແຂງໃຫ້ ສສຊ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ), ການຄົ້ນຄວ້າດ້ານໂຄງປະກອບຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ); ການກະກຽມວຽກງານເລືອກຕັ້ງ; ການສ້າງ-ປັບປຸງນິຕິກຳ ເປັນຕົ້ນລະບຽບການດຳເນີນກອງປະຊຸມ, ການເຄື່ອນໄຫວຂອງຄະນະສສຊແລະອື່ນໆ. ປະທານ ກວສຊ ແຈ້ງໃຫ້ຊາບອີກວ່າ: ສຳລັບຕໍ່ໜ້ານີ້ ພັກໄດ້ກຳນົດແນວທາງໃຫ້ປັບປຸງບູລະນະອຳນາດການປົກຄອງທ້ອງຖິ່ນ ເຊິ່ງຈະໃຫ້ມີການສ້າງຕັ້ງຕາແສງ; ກຳນົດເອົາເລຂາພັກແຂວງ ເປັນປະທານ ສພຂ, ເລຂາພັກເມືອງ ເປັນຫົວໜ້າຄະນະ ສສຂ ປະຈຳເມືອງ (ປັດຈຸບັນ ລາວຍັງບໍ່ທັນມີສະພາປະຊາຊົນເມືອງ) ແລະ ໃນປີ 2025 ຕ້ອງກະກຽມດ້ານຕ່າງໆໃຫ້ແກ່ການເລືອກຕັ້ງ ສສຊ ແລະ ສສຂ ເຊິ່ງຈະດຳເນີນຂຶ້ນໃນຕົ້ນປີ 2026.

**(ນາງ ອາລິນ ສຸພົມມະປະກິດ)**

# ຮອງປະທານກຳມາທິການ ວັດທະນະທຳ-ສັງຄົມ ພົບປະຜູ້ແທນໄທ

(ສພຊ) - ວັນສຸກທີ 18 ຕຸລາຜ່ານມາ ທີ່ຫໍປະຊຸມແຫ່ງຊາດ ໄດ້ມີການພົບປະສອງຝ່າຍລະຫວ່າງຄະນະຜູ້ແທນສະພາແຫ່ງຊາດ ສປປລາວ ແລະ ຄະນະຜູ້ແທນສະພາຜູ້ ແທນລາສະດອນແຫ່ງ ລາຊະອານາຈັກໄທ ເຊິ່ງຝ່າຍລາວນຳໂດຍທ່ານດຣ.ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ຝ່າຍໄທນຳໂດຍທ່ານ ທາວພິພົບລິມຈິດຕຣາກອນຮອງປະທານກຳມາທິການທ່ອງທ່ຽວ.



ທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ໄດ້ຕີລາຄາສູງຕໍ່ການມາເຂົ້າຮ່ວມກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ຫຼື AIPA-45 ຂອງທ່ານປະທານກຳມາທິການທ່ອງທ່ຽວ ແລະ ຄະນະ ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຖານບ້ານໃກ້ເຮືອນຄຽງທີ່ດີທີ່ມີແຕ່ດົນນານ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ ລາວ-ໄທ ໃຫ້ສືບຕໍ່ຂະຫຍາຍຕົວ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ ທັງເປັນການສະໜັບສະໜູນ ແລະໃຫ້ກຳລັງໃຈແກ່ສະພາແຫ່ງຊາດລາວ ເຮັດສຳເລັດພັນທະສາກົນໃນການເປັນປະທານໄອປາ ກໍຄືເປັນເຈົ້າພາບຈັດກອງປະຊຸມ AIPA-45 ໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ ແລະ ເປັນໂອກາດດີທີ່ຈະໄດ້ປຶກສາຫາລື ແລະ ແລກປ່ຽນບົດຮຽນກ່ຽວກັບວຽກງານໃນຂົງເຂດນິຕິບັນຍັດຮ່ວມກັນ ໂດຍສະເພາະວຽກງານການທ່ອງທ່ຽວ ແລະ ວຽກງານອື່ນທີ່ປິ່ນອ້ອມ.

ສອງອົງການນິຕິບັນຍັດ ໄດ້ຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດ

ອ່ານຕໍ່ໜ້າ 10




## ພິທີເປີດ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໄດ້ເປີດຂຶ້ນຢ່າງເປັນທາງການໃນຕອນສວາຍຂອງວັນທີ 19 ຕຸລາ 2024 ທີ່ຫໍປະຊຸມແຫ່ງຊາດ ໂດຍການກ່າວເປີດຂອງທ່ານປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແລະ ປະທານໄອປາຄັ້ງທີ 45 ເຊິ່ງມີທ່ານ ທອງລຸນ ສີສຸລິດ ປະທານປະເທດແຫ່ງ ສປປ ລາວ; ສົມເດັດ, ປະທານສະພາ, ປະທານລັດຖະສະພາຈາກບັນດາປະເທດສະມາຊິກໄອປາ ແລະ ປະເທດສັງເກດການ; ເລຂາທິການໃຫຍ່ໄອປາ ແລະ ເລຂາທິການໃຫຍ່ອາຊຽນ; ສະມາຊິກລັດຖະສະພາ, ທູຕານຸທູດ, ຕາງໜ້າອົງການຈັດຕັ້ງສາກົນ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນພິທີເປີດ, ທ່ານ ປອ. ໄຊສົມພອນ ພົມວິຫານ ກ່າວວ່າ: ກອງປະຊຸມສະມັດຊາໃຫຍ່ໄອປາແມ່ນເວທີໜຶ່ງທີ່ມີຄວາມໝາຍຄວາມສຳຄັນຍິ່ງ ເຊິ່ງສະມາຊິກລັດຖະສະພາຈາກບັນດາປະເທດອາຊຽນ ຈະໄດ້ຮ່ວມກັນຄົ້ນຄວ້າ, ປຶກສາຫາລືແລະກຳນົດທິດທາງການດຳເນີນງານ ເພື່ອບັນລຸຈຸດປະສົງແລະຄາດໝາຍລວມຂອງໄອປາ ກໍຄືອາຊຽນ; ການຮ່ວມມືເພື່ອການພັດທະນາ, ການປົກປັກຮັກສາສັນຕິພາບ, ສະຖຽນລະພາບ, ຄວາມໝັ້ນຄົງ ແລະ ຄວາມຈະເລີນຮຸ່ງເຮືອງຍັງເປັນທ່າອຽງລວມຂອງປະຊາຊາດ ເຊິ່ງເຫັນໄດ້ຈາກສະພາບເສດຖະກິດ-ການເງິນໃນຫຼາຍປະເທດ ແລະ ພາກພື້ນ ພວມໄດ້ຮັບການແກ້ໄຂ, ມີທ່ວງທ່າໝັ້ນທ່ຽງດີຂຶ້ນ ເວົ້າລວມ, ເວົ້າສະເພາະແມ່ນປະຊາຄົມອາຊຽນມີຄວາມຄືບໜ້າ ແລະປະສົບຜົນສຳເລັດຕາມຄາດໝາຍໃນການຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ2025 ແລະ ແຜນແມ່ບົດ ພາຍໃຕ້ 3 ເສົາຄ້ຳປະຊາຄົມອາຊຽນກໍຄືແຜນແມ່ບົດວ່າດ້ວຍການເຊື່ອມຈອດ 2025 ແລະ ແຜນປະຕິບັດງານຂໍ້ລິເລີ່ມເພື່ອການເຊື່ອມໂຍງອາຊຽນ. ໄອປາໃນນາມທີ່ເປັນອົງການນິຕິບັນຍັດ ແລະ ເປັນຕົວແທນແຫ່ງສິດຂອງປະຊາຊົນປະເທດສະມາຊິກອາຊຽນ ໂດຍມີຈຸດປະສົງຕົ້ນຕໍເພື່ອຊຸກຍູ້ພາລະກິດລວມຂອງອາຊຽນ ໃຫ້ບັນລຸຜົນປະໂຫຍດຕາມເປົ້າໝາຍທີ່ວາງໄວ້.

ກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ 45 ນີ້ ໄດ້ກຳນົດຄຳຂວັນ: "ບົດບາດຂອງລັດຖະສະພາໃນການຊຸກຍູ້ການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມຂອງອາຊຽນ" ແມ່ນສອດຄ່ອງກັບຄຳຂວັນປະທານອາຊຽນຂອງສປປລາວຄື: "ຮັດແໜ້ນການເຊື່ອມຈອດ ແລະ ຄວາມເຂັ້ມແຂງອາຊຽນ" ໂດຍສຸມໃສ່ການຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ ໃນປີ 2025 ເພື່ອເຮັດໃຫ້ພາກພື້ນມີການເຊື່ອມຈອດແລະເຂັ້ມແຂງ ທັງເປັນການຊຸກຍູ້ສົ່ງເສີມຄວາມພະຍາຍາມຂອງບັນດາປະເທດສະມາຊິກອາຊຽນ ໃນການບັນລຸເປົ້າໝາຍດ້ານການພັດທະນາພື້ນຖານໂຄງລ່າງແລະລະບຽບການຕ່າງໆທີ່ມີການເຊື່ອມຈອດທາງດ້ານການຂົນສົ່ງ, ໂທລະຄົມມະນາຄົມ, ພະລັງງານ ແລະ ອື່ນໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າ, ການລົງທຶນ, ການຜະລິດ, ການບໍລິການ, ການທ່ອງທ່ຽວ ແລະ ການໄປມາຫາສູ່ກັນຂອງປະຊາຊົນອາຊຽນໃຫ້ຫຼາຍຂຶ້ນ, ການເຊື່ອມໂຍງທາງດ້ານເສດຖະກິດ, ການຮັດແຄບຄວາມແຕກໂຕນທາງດ້ານການພັດທະນາ, ສ້າງເສດຖະກິດອາຊຽນມີຄວາມເຂັ້ມແຂງ, ເປີດກວ້າງ, ປະຊາຄົມມີຄວາມສາມັກຄີປອງດອງ, ມີການພັດທະນາທີ່ເທົ່າທຽມກັນ ແລະ ການເສີມຂະຫຍາຍການພົວພັນຮ່ວມມືອາຊຽນກັບຄູ່ຮ່ວມມືພາຍນອກເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ ແລະ ພ້ອມກັນກ້າວໄປຂ້າງໜ້າ.

ທ່ານປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ແລະ ປະທານໄອປາຄັ້ງທີ 45 ໄດ້ຕີລາຄາສູງຕໍ່ການປະສານສົມທົບລະຫວ່າງໄອປາກັບອາຊຽນ ເຊິ່ງໄດ້ມີກົນໄກພົບປະເຮັດວຽກຮ່ວມກັນເປັນລະບົບ ແລະ ມີການປັບປຸງດີຂຶ້ນ ເປັນຕົ້ນການພົບປະລະຫວ່າງຜູ້ນຳອາຊຽນກັບຜູ້ນຳໄອປາ, ການເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ໄອປາຂອງເລຂາທິການໃຫຍ່ອາຊຽນ, ການເຂົ້າຮ່ວມກອງປະຊຸມ ແລະ ກິດຈະກຳຕ່າງໆຂອງກັນແລະກັນ ກໍຄືການແລກປ່ຽນຂໍ້ມູນຂ່າວສານນຳກັນ. ໃນຂະບວນການສ້າງປະຊາຄົມອາຊຽນໃຫ້ເຂັ້ມແຂງ ກໍຄືການຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນຫຼັງປີ 2025, ໄອປາ ແລະ ອາຊຽນ ຍິ່ງຈະຕ້ອງເພີ່ມທະວີການຮ່ວມມື,ຮັດແໜ້ນການເປັນຄູ່ຮ່ວມທີ່ສະໜັບສະໜູນການປະຕິບັດໜ້າທີ່ເຊິ່ງກັນແລະກັນຕາມພາລະບົດບາດຂອງຕົນ ເພື່ອເສີມສ້າງສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາແບບຍືນຍົງ ເພື່ອນຳເອົາຄວາມອຸດົມສົມບູນພູນສຸກມາສູ່ປະຊາຊົນໃນບັນດາປະເທດສະມາຊິກອາຊຽນຢ່າງແທ້ຈິງ.

ທ່ານ ທອງລຸນ ສີສຸລິດ ໄດ້ກ່າວສູນທອນພິດຕໍ່ພິທີເປີດກອງປະຊຸມໂດຍໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ 45 ຂອງບັນດາທ່ານຜູ້ແທນ; ນອກຈາກເປັນການສະແດງໃຫ້ເຫັນເຖິງຄວາມສຳຄັນຂອງໄອປາແລ້ວ, ຍັງເປັນການສະໜັບສະໜູນ ສປປ ລາວ ກໍຄືສະພາແຫ່ງຊາດລາວ ໃນການເຮັດໜ້າທີ່ເປັນເຈົ້າພາບແລະເປັນປະທານຈັດກອງປະຊຸມໄອປາຄັ້ງທີ 45 ອີກດ້ວຍ. ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບົດບາດຂອງໄອປາ ໃນຖານະທີ່ເປັນອົງການນິຕິບັນຍັດ ທັງເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນໃນອາຊຽນ ໃນການຊຸກຍູ້ສົ່ງເສີມການຮ່ວມມືພາຍໃນອາຊຽນ ແລະ ອາຊຽນກັບພາຍນອກ ໂດຍສະເພາະການສ້າງ ແລະສະໜອງຂໍ້ມູນທາງດ້ານກົດໝາຍ, ການໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ຊຸກຍູ້ການ ຈັດຕັ້ງປະຕິບັດແຜນດຳເນີນງານຕ່າງໆໃນຂອບການຮ່ວມມືອາຊຽນຢ່າງຕັ້ງໜ້າອັນໄດ້ປະກອບສ່ວນເຂົ້າໃນຂະບວນການສ້າງປະຊາຄົມອາຊຽນ ແລະ ເຮັດໃຫ້ອາຊຽນນັບມື້ໄດ້ຮັບການພັດທະນາໃຫ້ມີຄວາມເຂັ້ມແຂງ, ມີຄວາມສາມັກຄີແລະເປີດກວ້າງ, ຮັດແຄບຄວາມແຕກໂຕນທາງດ້ານການພັດທະນາ ແລະຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນອາຊຽນໃຫ້ດີຂຶ້ນເປັນກ້າວໆ. ພ້ອມກັນນັ້ນ, ທ່ານກໍເຊື່ອໝັ້ນວ່າກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ 45 ນີ້ ຈະເປັນໂອກາດດີໃຫ້ແກ່ຄະນະຜູ້ແທນລັດຖະສະພາສະມາຊິກໄອປາ, ລັດຖະສະພາປະເທດຜູ້ສັງເກດການ ແລະ ຄູ່ຮ່ວມພັດທະນາຂອງໄອປາ ໄດ້ສະແດງຄວາມຄິດເຫັນ ແລະແລກປ່ຽນທັດສະນະຂອງຕົນຢ່າງກົງໄປກົງມາ, ມີວິໄສທັດ ແລະ ສ້າງສັນ ເພື່ອຮັດແໜ້ນການຮ່ວມມືແລະກຳນົດທິດທາງໃນຕໍ່ໜ້າສຳລັບວຽກງານໄອປາໃນອະນາຄົດເພື່ອພາລະກິດ ລວມແຫ່ງການປົກປັກຮັກສາ ແລະ ສົ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາແບບຍືນຍົງຂອງພາກພື້ນ ແລະ ຂອງໂລກ ເພື່ອຮັບປະກັນໃຫ້ແກ່ການສືບຕໍ່ປະກອບສ່ວນເຂົ້າໃນການສ້າງປະຊາຄົມອາຊຽນທີ່ມີການເຊື່ອມຈອດ, ເຂັ້ມແຂງຂຶ້ນກວ່າເກົ່າ, ຮ່ວມກັນພັດທະນາ ແລະ ກ້າວສູ່ຄວາມຈະເລີນຮຸ່ງເຮືອງ ເພື່ອນຳຜົນປະໂຫຍດຕົວຈິງມາສູ່ປະຊາຊົນຂອງບັນດາປະເທດສະມາຊິກອາຊຽນຢ່າງທົ່ວເຖິງຕາມວາລະການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດ.

ໃນໄລຍະດຳເນີນກອງປະຊຸມສະມັດຊາໃຫຍ່ໄອປາຈະມີກອງປະຊຸມບັນດາກຳມາທິການປະຈຳຕ່າງໆ ເຊິ່ງຈະໄດ້ລົງເລິກຄົ້ນຄວ້າ, ປຶກສາຫາລືບັນດາເນື້ອໃນ ແລະ ຮ່າງມະຕິໃນຂົງເຂດການເມືອງ, ເສດຖະກິດ, ສັງຄົມ, ແມ່ຍິງ, ຊາວໜຸ່ມ ແລະ ວຽກງານພາຍໃນຂອງໄອປາ; ນອກຈາກນີ້, ຍັງຈະມີກອງປະຊຸມລະຫວ່າງໄອປາ ກັບ ລັດຖະສະພາປະເທດສັງເກດການເພື່ອຊອກຫາຊ່ອງທາງໃນການຮ່ວມມືກັນ, ວິທີແກ້ໄຂບັນຫາ ແລະ ສິ່ງທ້າທາຍຕ່າງໆຮ່ວມກັນ, ສະໜັບສະໜູນບັນດາເປົ້າໝາຍອາຊຽນແນໃສ່ຮັບປະກັນການເຊື່ອມໂຍງ ແລະ ການເຕີບໂຕແບບກວມລວມ. ພ້ອມກັນນີ້, ກອງປະຊຸມຍັງໄດ້ຕ້ອນຮັບຄູ່ຮ່ວມພັດທະນາໄອປາ ຈາກຫຼາຍອົງການຈັດຕັ້ງສາກົນ ເຊິ່ງເປັນໂອກາດອັນດີທີ່ຈະໄດ້ມີການແລກປ່ຽນຄຳຄິດເຫັນ ແລະ ປະສົບການກ່ຽວກັບການຍົກສູງຂີດຄວາມສາມາດໃນການປະຕິບັດໜ້າທີ່ຂອງໄອປາ ກໍຄືລັດຖະສະພາສະມາຊິກໄອປາ ໃຫ້ເຂັ້ມແຂງຂຶ້ນ.

**(ນາງ ອາລິນ ສຸພົມມະປະກິດ)**

# ອະນຸກຳມະການສຸຂະພາບ ຕິດຕາມກວດກາຄວາມພ້ອມຮອບດ້ານ



(ສພຊ)-ເພື່ອຮັບປະກັນໃຫ້ແກ່ການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 17-23 ຕຸລາ 2024 ໃຫ້ມີຄວາມພ້ອມ ແລະ ຄວາມປອດໄພທາງດ້ານສຸຂະພາບ ແກ່ບັນດາຜູ້ແທນທີ່ຈະເຂົ້າຮ່ວມກອງປະຊຸມດັ່ງກ່າວ; ວັນທີ 10 ຕຸລາຜ່ານມາ, ທ່ານ ດຣ. ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ, ຫົວໜ້າອະນຸກຳມະການສຸຂະພາບ ແລະ ທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ຮອງຄະນະຊີ້ນຳລວມ ອະນຸກຳມະການສຸຂະພາບ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາຄວາມພ້ອມດ້ານສະຖານທີ່, ຢາ, ອຸປະກອນການແພດ, ພາຫະນະນຳສົ່ງ (ລົດ Ambulant) ແລະ ໜ່ວຍງານແພດຕາມວິຊາສະເພາະທີ່ກ່ຽວຂ້ອງ ຮັບໃຊ້ ແລະ ປະຈຳການໃຫ້ບໍລິການປິ່ນປົວສຸຂະພາບຢູ່ 3 ໂຮງໝໍສູນກາງຄື: ໂຮງໝໍເສດຖາທິຣາດ, ໂຮງໝໍມະໂຫສົດ ແລະ ໂຮງໝໍມິດຕະພາບ ເພື່ອຮັບຮອງກໍລະນີເຫດການສຸກເສີນທາງດ້ານສາທາລະນະສຸກທີ່ອາດຈະເກີດຂຶ້ນ, ມີລະບົບກົນໄກປະສານງານກັບກະຊວງສາທາລະນະສຸກ, ຍົນ ແລະ ໂຮງໝໍ ເພື່ອນຳສົ່ງຄົນເຈັບໄປຕ່າງປະເທດໃນກໍລະນີຈຳເປັນ; ການກະກຽມໜ່ວຍງານເຝົ້າລະວັງກໍລະນີເກີດການແຜ່ລະບາດຂອງພະຍາດລະດູການ ຫຼື ພະຍາດຕິດຕໍ່ທີ່ຮ້າຍແຮງອື່ນ; ມີການປະສານກັບຄະນະສະເພາະກິດລະດັບຊາດ, ການສົມທົບກັບກົມຄວບຄຸມພະຍາດຕິດຕໍ່, ກົມອະນາໄມ-ສົ່ງເສີມສຸຂະພາບ, ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ເພື່ອຄວາມພ້ອມຮອບດ້ານທາງດ້ານສາທາລະນະສຸກອື່ນ; ການຕິດຕາມລາຍງານ ແລະ ເກັບກຳຂໍ້ມູນສະພາບການດ້ານສຸຂະພາບຂອງຜູ້ແທນ, ຕິດຕາມຂໍ້ມູນຂ່າວສານສຸຂະພາບອື່ນໆຜ່ານສື່ອອນລາຍ ແລະ ສື່ເອເລັກໂຕຣນິກຕ່າງໆ ໃນໄລຍະກະກຽມ ແລະ ດຳເນີນກອງປະຊຸມ.

ແຫຼ່ງຂ່າວໃຫ້ຮູ້ຕື່ມວ່າ: ວັນອາທິດທີ 13 ຕຸລາຜ່ານມາ, ທ່ານ ດຣ. ຄຳຈັນ ໂສຕາປະເສີດ ໄດ້ເຄື່ອນໄຫວຕິດຕາມກວດກາຢູ່ຫໍປະຊຸມແຫ່ງຊາດ, ໂຮງແຮມລາດຊະວົງ, ໂຮງແຮມຄຣາວພລາຊາ ແລະ ໂຮງແຮມຮິວຕັນ (Hilton), ທັງນີ້ ກໍເພື່ອຮັບປະກັນໃຫ້ວຽກງານສົ່ງເສີມສຸຂະພາບ, ປ້ອງກັນພະຍາດ ແລະ ຄວບຄຸມພະຍາດຕິດຕໍ່ ໃນໄລຍະດຳເນີນກອງປະຊຸມໄອປາ. ການເຄື່ອນໄຫວຕິດຕາມກວດກາຄັ້ງນີ້, ແມ່ນໄດ້ມີການປະສານສົມທົບກັບກົມຄວບຄຸມພະຍາດຕິດຕໍ່, ກົມອະນາໄມ-ສົ່ງເສີມສຸຂະພາບ, ກົມອາຫານ ແລະຢາ ເພື່ອເຮັດໃຫ້ວຽກງານສົ່ງເສີມສຸຂະພາບ,ກັນແລະຄວບຄຸມພະຍາດຕິດຕໍ່ ລວມໄປເຖິງຄວາມປອດໄພທາງດ້ານອາຫານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ, ຜູ້ແທນສາມາດເຂົ້າຮ່ວມກອງປະຊຸມແຕ່ຕົ້ນຕະຫຼອດປາຍ ໂດຍປາສະຈາກບັນຫາທາງດ້ານສຸຂະພາບ, ພະຍາດຕິດຕໍ່ ແລະ ເຫດການສຸກເສີນຕ່າງໆທາງດ້ານສາທາລະນະສຸກ; ສາມາດຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດຕິດຕໍ່ທີ່ຮ້າຍແຮງ ແລະ ພະຍາດທີ່ສົ່ງຜົນກະທົບຕໍ່ສຸຂະພາບຂອງຜູ້ແທນທີ່ອາດຈະເກີດຂຶ້ນໃນໄລຍະດຳເນີນກອງປະຊຸມ, ຈຳກັດບໍ່ໃຫ້ມີການແຜ່ລາມ ແລະ ແຜ່ລະບາດເປັນວົງກວ້າງຢູ່ຫ້ອງປະຊຸມ, ໂຮງແຮມ, ຮ້ານອາຫານຕ່າງໆ; ໂດຍໄດ້ກະກຽມຈັດໜ່ວຍແພດປິ່ນປົວປະຈຳຢູ່ສະຖານທີ່ເຫຼົ່ານັ້ນ ແລະ ສະຖານທີ່ພັກຂອງຜູ້ແທນ ເພື່ອຮັບປະກັນໄດ້ຄວາມປອດໄພຮ້ອຍສ່ວນຮ້ອຍ.

## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢ່າງເປັນທາງການ ໃນລະຫວ່າງວັນທີ 17-19 ຕຸລາ 2024 ແລະ ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ທີ່ ສປປລາວ ເປັນເຈົ້າພາບ. ອອກຕ້ອນຮັບທີ່ສະໜາມບິນສາກົນວັດໄຕ ໂດຍ ສະຫາຍ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ.

ພິທີຕ້ອນຮັບຢ່າງເປັນທາງການ ໄດ້ຈັດຂຶ້ນໃນວັນທີ 17 ຕຸລາ ທີ່ສະພາແຫ່ງຊາດ ໂດຍການເຂົ້າຮ່ວມຂອງ ສະຫາຍ ປອ. ໄຊສົມພອນ ພົມວິຫານ ພ້ອມດ້ວຍຄະນະ, ຫຼັງຈາກນັ້ນ ໄດ້ມີພິທີພົບປະສອງຝ່າຍຢ່າງເປັນທາງການ ເພື່ອຮ່ວມກັນທົບທວນຄືນການພົວພັນຮ່ວມມືສອງຝ່າຍ ພ້ອມທັງກຳນົດທິດທາງການຮ່ວມມືໃນຕໍ່ໜ້າ.

ໃນໂອກາດນີ້, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການເດີນທາງມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ແລະ ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ຫຼື AIPA-45 ເຊິ່ງເປັນການຢ້ຽມຢາມ ສປປ ລາວ ຢ່າງເປັນທາງການຄັ້ງທຳອິດໃນນາມປະທານສະພາແຫ່ງຊາດຂອງ ສະຫາຍ ເຈິ່ນ ແທັງ ເໝິນ, ເປັນການປະກອບສ່ວນສຳຄັນເຂົ້າໃນການຮັດແໜ້ນ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ໂດຍສະເພາະລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ ທັງເປັນການສະໜັບສະໜູນ ແລະ ໃຫ້ກຳລັງໃຈອັນແຮງກ້າແກ່ສະພາແຫ່ງຊາດລາວ ໃນການເປັນປະທານໄອປາ ກໍຄືເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນຄັ້ງທີ 45 ໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ; ຕີລາຄາສູງຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງຮອບດ້ານທີ່ປະຊາຊົນຫວຽດນາມອ້າຍນ້ອງຍາດມາໄດ້ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກກອມມູນິດຫວຽດນາມ ໃນພາລະກິດພັດທະນາປະເທດຊາດຕາມມະຕິກອງປະຊຸມໃຫຍ່ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ (2021-2025) ພິເສດແມ່ນຜົນສຳເລັດກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດຫວຽດນາມ ຊຸດທີ XV ໃນກາງເດືອນສິງຫາຜ່ານມາ ທີ່ໄດ້ຕົກລົງຮັບຮອງເອົາຫຼາຍບັນຫາສຳຄັນຂອງຊາດ; ສະແດງຄວາມພາກພູມໃຈຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງສອງປະເທດ, ສອງສະພາແຫ່ງຊາດ ຍັງສືບຕໍ່ໄດ້ຮັບການພັດທະນາ ກ້າວເຂົ້າສູ່ລວງເລິກ ແລະ ເສີມຂະຫຍາຍຂຶ້ນຢ່າງບໍ່ຢຸດຢັ້ງ.




ສະຫາຍ ເຈິ່ນ ແທັງ ເໝິນ ໄດ້ສະແດງຄວາມພາກພູມໃຈທີ່ໄດ້ມາຢ້ຽມຢາມຢ່າງເປັນທາງການຄັ້ງທຳອິດ ແລະ ຮ່ວມກອງປະຊຸມໃຫຍ່ໄອປາຄັ້ງທີ 45 ທີ່ ສປປລາວ, ຕີລາຄາສູງຕໍ່ການພັດທະນາປະເທດຊາດຂອງລາວ, ແຈ້ງສະພາບການພັດທະນາເສດຖະກິດ-ສັງຄົມຂອງຫວຽດນາມ ແລະການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດຫວຽດນາມ-ລາວ ພ້ອມທັງເນັ້ນໜັກໃຫ້ສອງຝ່າຍເອົາໃຈໃສ່ຈັດຕັ້ງປະຕິບັດບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງສອງສະພາແຫ່ງຊາດຫວຽດນາມ-ລາວ; ສືບຕໍ່ແລກປ່ຽນຂໍ້ມູນຂ່າວສານເຊິ່ງກັນ ແລະ ກັນ; ສືບຕໍ່ຮ່ວມກັນໃນການຕິດຕາມກວດກາ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ນັກລົງທຶນຫວຽດນາມຢູ່ ສປປລາວ; ຮ່ວມມືແລະສະໜັບສະໜູນເຊິ່ງກັນແລະກັນ ໃນການເຄື່ອນໄຫວໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ສອງຝ່າຍໄດ້ຢືນຢັນການເພີ່ມທະວີຮັດແໜ້ນສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານ ທີ່ໄດ້ຮັບການສ້າງຕັ້ງ ແລະ ຖະນຸຖະໜອມໂດຍການນຳຮຸ່ນທຳອິດຂອງສອງປະເທດ ແລະ ປັດຈຸບັນ ໄດ້ກາຍເປັນມໍລະດົກລວມທີ່ລ້ຳຄ່າ, ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງແຕ່ລະປະເທດ ແລະ ເປັນໜຶ່ງໃນບັນດາປັດໄຈແຫ່ງໄຊຊະນະການປະຕິວັດຂອງແຕ່ລະປະເທດ.

ການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ໄດ້ຮັບການເສີມຂະຫຍາຍທາງກວ້າງ ແລະ ທາງເລິກສະເໝີມາ; ສອງຝ່າຍໄດ້ມີການພົວພັນຮ່ວມມື, ສະໜັບສະໜູນຊ່ວຍເຫຼືອເຊິ່ງກັນ ແລະ ກັນເປັນຢ່າງດີ; ໄດ້ມີການແລກປ່ຽນການຢ້ຽມຢາມຂອງການນຳຂັ້ນສູງໃນລະດັບຂັ້ນປະທານ ແລະ ຮອງປະທານສະພາແຫ່ງຊາດ, ຂັ້ນປະທານກຳມາທິການ, ສະມາຊິກສະພາແຫ່ງຊາດ ແລະ ຂັ້ນວິຊາການນຳກັນ ເພື່ອແລກປ່ຽນຄຳຄິດຄຳເຫັນ, ຊຸກຍູ້ສິ່ງເສີມການພົວພັນຮ່ວມມືໃນຕໍ່ໜ້າ ໂດຍສະເພາະການຮ່ວມກັນຕິດຕາມກວດກາ, ການຊຸກຍູ້ການຈັດຕັ້ງປະຕິບັດໂຄງການຮ່ວມມືລະຫວ່າງສອງປະເທດ.

ສະຫາຍ ປອ. ໄຊສົມພອນ ພົມວິຫານ ຕາງໜ້າໃຫ້ພັກ, ສະພາແຫ່ງຊາດ, ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຮູ້ບຸນຄຸນເປັນຢ່າງສູງ ແລະ ຂອບໃຈຢ່າງຈິງໃຈມາຍັງພັກ, ສະພາແຫ່ງຊາດ, ລັດຖະບານ ແລະ ປະຊາຊົນຫວຽດນາມອ້າຍນ້ອງທີ່ໄດ້ໃຫ້ການສະໜັບສະໜູນ ແລະການຊ່ວຍເຫຼືອອັນໃຫຍ່ຫຼວງ, ລ້ຳຄ່າ ແລະທັນການແກ່ປະຊາຊົນລາວ ໃນພາລະກິດຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍຄືພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດໃນປັດຈຸບັນ ສົມດັ່ງຄຳເວົ້າທີ່ວ່າ "ເຂົ້າເມັດຫັກຜັກເສັ້ນໜຶ່ງ ກໍບິແບ່ງກັນກິນ" ພິເສດແມ່ນການຊ່ວຍເຫຼືອໂຄງການກໍ່ສ້າງຕຶກສະພາແຫ່ງຊາດທີ່ເປັນຕົວແທນແຫ່ງສາຍພົວພັນທີ່ມີລັກສະນະພິເສດຂອງສອງປະເທດລາວ-ຫວຽດນາມ; ໄດ້ຊ່ວຍເຫຼືອຊ່ຽວຊານທີ່ປຶກສາການກະກຽມການຈັດຕັ້ງກອງປະຊຸມ ພ້ອມທັງຊ່ວຍດ້ານວັດຖຸອຸປະກອນເຄື່ອງໃຊ້ຕ່າງໆໃຫ້ແກ່ສະພາແຫ່ງຊາດລາວ ໃນການເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດ ຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45.

ພາຍຫຼັງສຳເລັດການພົບປະ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ແລະ ສະຫາຍ ເຈິ່ນ ແທັງ ເໝິນ ກໍໄດ້ເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມແລກປ່ຽນບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງກຳມາທິການການຕ່າງປະເທດ ສະພາແຫ່ງຊາດລາວ ແລະ ກຳມາທິການການຕ່າງປະເທດ ສະພາແຫ່ງຊາດຫວຽດນາມ, ນະຄອນຫຼວງພະບາງ ແຂວງຫຼວງພະບາງ ສປປ ລາວ ແລະ ນະຄອນໂຫ້ຍອ່ານ ແຂວງກວ້າງນາມ ສສ.ຫວຽດນາມ; ຫຼັງຈາກນັ້ນ, ໄດ້ມີພິທີມອບຮັບເຄື່ອງຊ່ວຍເຫຼືອຈາກສະພາແຫ່ງຊາດຫວຽດນາມ ມອບໃຫ້ແກ່ສະພາແຫ່ງຊາດລາວ.

ນອກຈາກນັ້ນ, ສະຫາຍປະທານສະພາແຫ່ງຊາດຫວຽດນາມ ຍັງໄດ້ເຂົ້າຢ້ຽມຂ່ຳນັບສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແລະພົບປະສະຫາຍຮອງປະທານປະເທດ, ສະຫາຍນາຍົກລັດຖະມົນຕີ, ບັນດາສະຫາຍອະດີດການນຳພັກ, ລັດ ແລະ ສະພາແຫ່ງຊາດ ແຫ່ງ ສປປ ລາວ.

**(ຂ່າວ: ນາງ ໄຊໂສພາພອນ ມິ່ງມຸງຄຸນ, ພາບ: ສອນສັກ ວັນວິໄຊ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຫົວໜ້າຄະນະຜູ້ແທນລັດຖະສະພາສະມາຊິກໄອປາ, ສະມາຊິກຄະນະບໍລິຫານງານໄອປາ, ເລຂາທິການໃຫຍ່ໄອປາ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ປອ. ໄຊສົມພອນ ພົມວິຫານ ກ່າວວ່າ: ການເຂົ້າຮ່ວມຂອງບັນດາທ່ານມີຄວາມໝາຍ ແລະ ຄວາມສຳຄັນເປັນຢ່າງຍິ່ງ ໃນການຢືນຢັນຄືນຄວາມໝາຍໝັ້ນຮ່ວມກັນທີ່ຈະສົ່ງເສີມການຮ່ວມມືຂອງລັດຖະສະພາທີ່ແໜ້ນແຟ້ນ ແລະເສີມຂະຫຍາຍການທູດພາຍໃນຄອບຄົວໄອປາ; ພ້ອມກັນນັ້ນ, ພວກເຮົາພະຍາຍາມສ້າງປະຊາຄົມອາຊຽນທີ່ມີຄວາມເປັນເອກະພາບແລະເຂັ້ມແຂງ, ສອດຄອງກັບເປົ້າໝາຍວິໄສທັດປະຊາຄົມອາຊຽນ 2025 ແລະ ຄວາມມຸ່ງມາດປາຖະໜາຮ່ວມກັນເພື່ອອະນາຄົດ.

ໃນກອງປະຊຸມ ໄດ້ມີ




ການປຶກສາຫາລື ແລະ ພິຈາລະນາ 12 ວາລະຫົວຂໍ້ ແລະ ມີ 4 ຫົວຂໍ້ເພີ່ມຕື່ມ ຄື: 1. ຕາຕະລາງການດຳເນີນກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45, ກອງປະຊຸມເວທີປຶກສາຫາລືຜູ້ນຳທາງການເມືອງເພດຍິງຂອງສະມາຊິກລັດຖະສະພາເພດຍິງໄອປາ ເຊິ່ງຈະຈັດຂຶ້ນໃນວາລະກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ 45; 2. ວາລະກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45 ປະກອບມີ: ກຳມາທິການວຽກງານການເມືອງ, ກຳມາທິການວຽກງານເສດຖະກິດ, ກຳມາທິການວຽກງານສັງຄົມ, ກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ, ກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາ, ກຳມາທິການວຽກງານຈັດຕັ້ງພາຍໃນໄອປາ; 3. ພິຈາລະນາຫົວຂໍ້ກອງປະຊຸມປຶກສາຫາລືກັບລັດຖະສະພາສັງເກດການໄອປາ; 4. ພິຈາລະນາຫົວຂໍ້ກອງປະຊຸມປຶກສາຫາລືລະຫວ່າງກອງເລຂາໄອປາແລະອາຊຽນ ຄັ້ງທີ 3; 5. ພິຈາລະນາອົງປະຊຸມກຳມາທິການປະຈຳ ແລະ ກອງປະຊຸມຕ່າງໆ ໃນວາລະກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ 45 ປະກອບມີ: ກຳມາທິການວຽກງານການເມືອງ, ກຳມາທິການວຽກງານເສດຖະກິດ, ກຳມາທິການວຽກງານສັງຄົມ, ກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ, ກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາ, ກຳມາທິການວຽກງານຈັດຕັ້ງພາຍໃນ, ກອງປະຊຸມປຶກສາຫາລືກັບລັດຖະສະພາສັງເກດການ, ກອງປະຊຸມປຶກສາຫາລືລະຫວ່າງກອງເລຂາໄອປາ ແລະ ອາຊຽນ ຄັ້ງທີ 3, ກອງປະຊຸມຮ່າງຖະແຫຼງການຮ່ວມ; 6. ຮັບຟັງບົດລາຍງານການເຄື່ອນໄຫວວຽກງານຂອງກອງເລຂາໄອປາປະຈຳປີ 2023-2024 ໂດຍທ່ານເລຂາທິການໃຫຍ່ໄອປາ; 7. ວັນເວລາ ແລະ ສະຖານທີ່ກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 46; 8. ວັນເວລາ ແລະ ສະຖານທີ່ ກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 47; 9. ພິຈາລະນາເຈົ້າພາບຈັດກອງປະຊຸມຄະນະປະສານງານໄອປາ (AIPA Caucus) ຄັ້ງທີ 16; 10. ພິຈາລະນາເຈົ້າພາບຈັດກອງປະຊຸມ AIPACODD ຄັ້ງທີ 8; 11. ພິຈາລະນາການມອບລາງວັນກຽດຕິຄຸນໃຫ້ຜູ້ທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນວຽກງານໄອປາ; 12. ການສະເໜີແລະຮັບຮອງເອົາລັດຖະສະພາສັງເກດການໃໝ່ໄອປາ: ສະພາແຫ່ງຊາດ ແຫ່ງ ລາຊະອານາຈັກບາເຣນ ແລະ ລັດຖະສະພາເຢຍລະມັນ; 13. ບັນຫາອື່ນໆ: ກອງປະຊຸມສຸດຍອດຜູ້ນຳໄອປາ, ການແຕ່ງຕັ້ງຄະນະສະເພາະກິດເພື່ອສ້າງກົນໄກທີ່ເໝາະສົມກ່ຽວກັບການແກ້ໄຂບັນຫາມຽນມາ, ການແຕ່ງຕັ້ງຄະນະກຳມະການຄົ້ນຄວ້າຄວາມເປັນໄປໄດ້ໃນການປ່ຽນຊື່ຈາກກອງປະຊຸມສະພາທີ່ປຶກສາໄອປາ ກ່ຽວກັບໄພອັນຕະລາຍຂອງຢາເສບຕິດ (AIPACODD) ເປັນກອງປະຊຸມສະພາທີ່ປຶກສາໄອປາ ກ່ຽວກັບອາຊະຍາກຳຂ້າມຊາດ (AIPA-ACT), ການສ້າງຕັ້ງຄະນະເຮັດວຽກ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ໄອປາແລະລັດຖະສະພາສະມາຊິກໄອປາ.

ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ຄົ້ນຄວ້າ ແລະ ພິຈາລະນາດ້ວຍຈິດໃຈທີ່ເຕັມໄປດ້ວຍໄມຕີຈິດມິດຕະພາບ, ເຄົາລົບເຊິ່ງກັນແລະກັນ ແລະ ມີວິໄສທັດຮ່ວມກັນ ເພື່ອການເຊື່ອມຈອດອາຊຽນທີ່ມີຄວາມເຂັ້ມແຂງຂຶ້ນກວ່າເກົ່າ, ເຮັດວຽກຮ່ວມກັນເພື່ອສ້າງພື້ນຖານໃຫ້ແກ່ກອງປະຊຸມສະມັດຊາໃຫຍ່ໄອປາ 45 ເປັນເວທີສຳລັບການປຶກສາຫາລືທີ່ມີໝາກມີຜົນ ແລະ ຜົນໄດ້ຮັບທີ່ມີການຫັນປ່ຽນໃໝ່ທີ່ຈະນຳເອົາຜົນປະໂຫຍດມາສູ່ປະເທດຊາດ ແລະ ພາກພື້ນ.

**(ນາງ ອາລິນ ສຸພົມມະປະດິດ)**




# ປະລິນຍາ ຫຼື ປັນຍາ...?

**# ດົ້ນກົບເມກ**

ການສຶກສາ ຖ້າມີຫຼັກການປັດຊະຍາຖືກຕ້ອງ ແຕ່ຄ່ານິຍົມມີທ່າອ່ຽງໃນທາງຜິດ ຄືບໍ່ເຂົ້າເຖິງແກ່ນຂອງອຸດົມການ ແລະ ເປົ້າໝາຍທີ່ຢາກໄດ້ ກໍພາໃຫ້ຫຼາຍຄົນຫຼົງຖືເອົາເປືອກບໍ່ເອົາແກ່ນ ເຊິ່ງຫຼາຍຄົນກໍຮູ້ແກ່ໃຈແລ້ວວ່າ ຫຼາຍຄົນຈົບປະລິນຍາສູງນັ້ນ ເປັນພຽງໄດ້ໃບປະລິນຍາ ແຕ່ຄວາມຮູ້ວິຊາການບໍ່ໄດ້ສູງຕາມຊັ້ນໃບປະກາດ ຂະນະດຽວກັນ ກໍຍັງຫຼົງໂຕເອງນຳອີກວ່າ ໄດ້ຈົບປະລິນຍາສູງກວ່າຄົນອື່ນ ແລ້ວກໍເວົ້າອວດເວົ້າໂມ້ອວດອ້າງແບບປັນຍາຕື້ນ.

ຜູ້ຂຽນຈຶ່ງຢາກຍົກເອົາທາງສຽງສັງຄົມທີ່ເວົ້າວ່າຮຽນສູງໄດ້ແຕ່ໃບປະລິນຍາແຕ່ບໍ່ໄດ້ປັນຍາສົມຄູ່ກັນ, ດັ່ງນັ້ນຈຶ່ງເປັນສິ່ງທີ່ໜ້າຄິດວ່າ ໃບປະລິນຍາຊັ້ນສູງບໍ່ແມ່ນສິ່ງຄ້ຳປະກັນຄຸນນະພາບປັນຍາ ແຕ່ຄວາມຮູ້ຈິງ-ໄດ້ໃຊ້ຄວາມຈິງ ເພື່ອສັງຄົມຕ່າງຫາກ ແລະ ໄດ້ຜ່ານວຽກຕົວຈິງແລ້ວ ສັງຄົມເຂົາຍອມຮັບແລ້ວຈຶ່ງຄ່ອຍຂີ້ໂມ້ ເຊິ່ງຖ້າໄດ້ຮັບແຕ່ພຽງໃບປະກາດຊັ້ນສູງມາ ກໍບໍ່ຄວນສະແດງໂຕເກີນຄວາມຮູ້ທີ່ມີຢູ່ຈິງ; ໃບປະລິນຍາກໍເອົາຍາກ ແຕ່ຄວາມຮູ້ວິຊາການແທ້ຈິງຍິ່ງຫາຍາກກວ່າ ໃຊ້ເວລາສຶກສາຄົ້ນຄວ້າ ໃຊ້ສະໝອງຄົ້ນຄິດກວ່າຈະເກີດປັນຍາ ເຊິ່ງຜູ້ຂຽນເຂົ້າໃຈວ່າ ເສັ້ນທາງສູ່ຄຸນນະພາບກໍຕ້ອງມີທັງປະລິນຍາ ແລະ ປັນຍາແທ້ຈິງຄູ່ກັນ... ທວນຄືນທົບທວນຄຳເຫັນຂອງປະທານປະເທດທີ່ກ່າວໃນກອງປະຊຸມຜູ້ບໍລິຫານການສຶກສາທົ່ວປະເທດ. ຜ່ານມານັ້ນ, ບາງປະເດັນເພິ່ນເວົ້າເຖິງຄ່ານິຍົມແຂ່ງຂັນກັນເອົາວຸດທິຊັ້ນຕຳແໜ່ງ ແລະ ໃບປະກາດສູງ ແຕ່ຄວາມຮູ້ບໍ່ສົມສ່ວນ ຜູ້ຮັບ ແລະ ຜູ້ມອບ ກໍຍິ້ມເປັນສືອາຍໆ ດັ່ງນັ້ນ ຄ່ານິຍົມທີ່ຢາກໄດ້ແຕ່ຊັ້ນປະລິນຍາແລ້ວອວດອ້າງກັນນັ້ນ ເປັນສິ່ງທີ່ໜ້າຄິດຫຼາຍ ເຊິ່ງຜູ້ຂຽນເອງສັງເກດເຫັນຄົນຮູ້ຈັກກັນບາງຄົນ ຮຽນຈົບປະລິນຍາສູງມາ ເວລາເວົ້າຍາມໃດກໍຢາກອວດ ແຕ່ບໍ່ເຄີຍໃຊ້ຄວາມຮູ້ສູງຄືວຸດທິປະລິນຍາ ສະແດງໃຫ້ເຫັນວ່າເຂົາຄົນນັ້ນ ອາດໄດ້ແຕ່ໃບປະລິນຍາສູງໆມາທໍ່ນັ້ນ ແຕ່ຄວາມຮູ້ວິຊາການແທ້ຈິງອາດຍັງຕ່ຳບໍ່ສົມໃບປະກາດ !.






## ກອງປະຊຸມ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນບ່າຍວັນທີ 19 ຕຸລານີ້ ທີ່ຫໍປະຊຸມແຫ່ງຊາດ, ກອງປະຊຸມຄົບຄະນະວາລະທີ 1 ຂອງກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45 ໂດຍການເປັນປະທານຂອງທ່ານປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງສປປລາວທັງເປັນປະທານ AIPA ຄັ້ງທີ 45; ເຂົ້າຮ່ວມມີບັນດາທ່ານປະທານລັດຖະສະພາ, ຫົວໜ້າຄະນະຜູ້ແທນລັດຖະສະພາສະມາຊິກໄອປາ ແລະ ບັນດາທ່ານຫົວໜ້າຄະນະຜູ້ແທນລັດຖະສະພາສັງເກດການຂອງໄອປາ, ບັນດາທ່ານສະມາຊິກລັດຖະສະພາ, ທ່ານເລຂາທິການໃຫຍ່ໄອປາ, ທ່ານເລຂາທິການໃຫຍ່ອາຊຽນແລະບັນດາແຂກຖືກເຊີນ.

ໃນກອງປະຊຸມ ໄດ້ມີການປຶກສາຫາລື ແລະ ຮັບຮອງເອົາຕາຕະລາງກິດຈະກຳຂອງກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ45, ວາລະດຳເນີນກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ45, ຫົວຂໍ້ກອງປະຊຸມພົບປະກັບບັນດາລັດຖະສະພາສັງເກດການໄອປາ, ຫົວຂໍ້ກອງປະຊຸມປຶກສາຫາລືລະຫວ່າງກອງເລຂາໄອປາແລະອາຊຽນ, ອົງປະກອບຂອງກຳມາທິການ ແລະ ກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45, ວັນທີ ແລະ ສະຖານທີ່ ຂອງກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 46, ປະເທດທີ່ຈະເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 47, ປະເທດທີ່ຈະເປັນເຈົ້າພາບຈັດກອງປະຊຸມຄະນະປະສານງານໄອປາ (AIPA Caucus) ຄັ້ງທີ 16, ພິຈາລະນາເຈົ້າພາບຈັດກອງປະຊຸມ AIPA CODD ຄັ້ງທີ 8 ແລະ ວຽກອື່ນໆ; ຈາກນັ້ນ, ຫົວໜ້າຄະນະຜູ້ແທນລັດຖະສະພາສະມາຊິກໄອປາ ແລະ ລັດຖະສະພາສັງເກດການໄອປາ, ເລຂາທິການໃຫຍ່ອາຊຽນ, ເລຂາທິການໃຫຍ່ໄອປາ, ຄູ່ຮ່ວມພັດທະນາຂອງໄອປາ ແລະ ລັດຖະສະພາທີ່ຖືກເຊີນ ຂຶ້ນກ່າວປະກອບຄຳຄິດຄຳເຫັນ.

**(ນາງ ອາລິນ ສຸພົມມະປະດິດ)**

# ສຳມະນາປັບປຸງເນື້ອໃນຮ່າງຄູ່ມື ການຄົ້ນຄວ້າບົດຄັດຫຍໍ້ກົດໝາຍ

(ສພຊ) - ເພື່ອປັບປຸງຮ່າງຄູ່ມື, ແບບໂຄງຮ່າງບົດຄົ້ນຄວ້າຄັດຫຍໍ້ກົດໝາຍ ແລະ ລາຍການປະເມີນ-ກວດກາຄຸນນະພາບການຄົ້ນຄວ້າຄັດຫຍໍ້ກົດໝາຍ, ວັນທີ 12-13 ຕຸລານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ(ສນສ) ໄດ້ຈັດກອງປະຊຸມສຳມະນາປັບປຸງເນື້ອໃນຮ່າງຄູ່ມືການຄົ້ນຄວ້າບົດຄັດຫຍໍ້ກົດໝາຍ ໂດຍການເປັນປະທານຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ເຊິ່ງມີຮອງຫົວໜ້າ ສນສ, ຫົວໜ້າ-ຮອງຫົວໜ້າກົມ ແລະ ສູນ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.




ກອງປະຊຸມສຳມະນາຄັ້ງນີ້ ມີຄວາມໝາຍສຳຄັນ ແລະ ຈຳເປັນຢ່າງພາວະວິໄສ ເພາະວ່າວຽກງານຄົ້ນຄວ້າຄັດຫຍໍ້ຮ່າງກົດໝາຍເພື່ອເປັນຂໍ້ມູນໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ ໃນການປະກອບຄຳເຫັນແລະພິຈາລະນາຮັບຮອງເອົາກົດໝາຍຕ່າງໆໃນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ; ນອກນັ້ນຍັງເພື່ອເປັນບ່ອນອີງພື້ນຖານໃນການເຄື່ອນໄຫວວຽກງານຕົວຈິງ, ເຮັດໃຫ້ເນື້ອໃນມີຄວາມຮັດກຸມ, ຄົບຖ້ວນ ແລະ ສົມບູນ ກ່ອນຈະນຳໄປທາບທາມລະດົມຄວາມເຫັນຈາກພາກສ່ວນກ່ຽວຂ້ອງພາຍໃນສະພາແຫ່ງຊາດ (ສພຊ); ປຶກສາຫາລືການກຳນົດແຜນການຈັດກອງປະຊຸມທາບທາມລະດົມຄວາມເຫັນຈາກພາກສ່ວນກ່ຽວຂ້ອງພາຍໃນ ສພຊ ແລະ ພາຍນອກ.

ທ່ານ ສິນທະລາ ຫຼ້າສຸກສະໄໝ ມີຄຳເຫັນວ່າ: ຕະຫຼອດການຈັດຕັ້ງປະຕິບັດວຽກງານຄົ້ນຄວ້າຄັດຫຍໍ້ຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ແມ່ນຍັງບໍ່ທັນມີນິຕິກຳເປັນບ່ອນອ້າງອີງໃນການຈັດຕັ້ງປະຕິບັດເປັນຕົ້ນການສະໜອງບົດຄົ້ນຄວ້າ, ຂໍ້ມູນການສົມທຽບກົດໝາຍໃຫ້ຄະນະປະຈຳສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ; ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມ ສຸມເນື້ອໃນຈິດໃຈໃນການປະກອບຄຳເຫັນ, ແລກປ່ຽນກັບວິທະຍາກອນ ເພື່ອໃຫ້ຄູ່ມືສະບັບນີ້ເປັນວິທະຍາສາດໄປຕາມໂຄງຮ່າງ, ຮູບແບບ ແລະ ຈຸດພິເສດຂອງສະພາແຫ່ງຊາດ.

ສຳມະນາກອນໄດ້ຮັບຟັງການສະເໜີ ແລະ ແລກປ່ຽນຄວາມເຫັນຕໍ່ເນື້ອໃນສຳຄັນຄື: ຮ່າງຄູ່ມືການຄົ້ນຄວ້າຄັດຫຍໍ້ກົດໝາຍຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ແບບໂຄງຮ່າງບົດຄົ້ນຄວ້າຄັດຫຍໍ້ກົດໝາຍ, ລາຍການປະເມີນ-ກວດກາຄຸນນະພາບການຄົ້ນຄວ້າຄັດຫຍໍ້ກົດໝາຍ, ປຶກສາຫາລື ແລະ ກຳນົດແຜນຈັດກອງປະຊຸມທາບທາມລະດົມຄວາມຄິດເຫັນໃສ່ຮ່າງຄູ່ມືຈາກພາກສ່ວນກ່ຽວຂ້ອງພາຍໃນສະພາແຫ່ງຊາດ ແລະ ພາຍນອກ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການSTEPs ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ບຸນເກີດ ວົງໄຊຍາ)**




# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

ເປັນທຳມະດາ ທີ່ປະຊາຊົນບໍ່ແມ່ນຈະເປັນຊະນິດດຽວກັນໝົດທຸກຄົນ. ພາຍໃນໝູ່ປະຊາຊົນນັ້ນ ຍ່ອມມີຫຼາຍຊັ້ນຄົນຕ່າງກັນ ລະດັບຄວາມຮັບຮູ້ ຄວາມສາມາດກໍຕ່າງກັນ, ຄຳຄິດຄຳເຫັນກໍຕ່າງກັນ. ມີບາງຈຳພວກກ້າວໜ້າ ມີບາງຈຳພວກເຄິ່ງໆກາງໆ ແລະ ມີບາງຈຳພວກຫຼ້າຫຼັງ. ເຖິງຈະເປັນດັ່ງນັ້ນກໍຕາມ ເມື່ອເອົາບັນຫາໃດບັນຫາໜຶ່ງອອກປຶກສາຫາລືນຳປະຊາຊົນນັ້ນ, ເຂົາເຈົ້າຫາກຈະເອົາຄຳຄິດຄຳເຫັນອັນຕ່າງກັນນັ້ນມາປຽບທຽບກັນ ປຽບໄປປຽບມາກໍຈະມີຄຳເຫັນອັນໜຶ່ງພົ້ນຂຶ້ນມາ ເຊິ່ງໝົດທຸກຄົນເຫັນດີນຳກັນ ຫຼື ວ່າຄົນສ່ວນຫຼາຍເຫັນດີນຳ. ຄຳເຫັນອັນນັ້ນເຂົາເຈົ້າຊ້ຳພັດເອົາມາປຽບທຽບກັນເປັນແຕ່ລະພາກສ່ວນ, ເອົາສິ່ງທີ່ດີມາຕື່ມໃສ່ ແລະ ເອົາສິ່ງທີ່ບໍ່ດີອອກຖິ້ມ. ທ້າຍສຸດ ຄຳເຫັນອັນນັ້ນກໍຈະເປັນຄຳເຫັນອັນຄົບຖ້ວນ, ເປັນບັນທັດຖານສຳລັບວັດແທກຄວາມຈະເລີນກ້າວໜ້າຂອງປະຊາຊົນໃນດ້ານນັ້ນໃນເວລານັ້ນ, ຖ້າຫາກເຮັດຕາມຄວາມເຫັນອັນນັ້ນແນ່ນອນຕ້ອງສຳເລັດຜົນ. ຜູ້ທີ່ຍັງບໍ່ທັນເຮັດຕາມນັ້ນແນ່ນອນຕ້ອງບໍ່ສຳເລັດຜົນ. ຜູ້ທີ່ຍັງບໍ່ທັນເຮັດຕາມນັ້ນ ກໍແມ່ນນັກສວຍໂອກາດຢຸດໆຢ່ອນໆ. ຜູ້ເຮັດໂພດ ຫຼື ກວ່າຄຳນັ້ນ ກໍແມ່ນສ່ຽງໄພ, ຄັບແຄບ ເອົາຄຳຄິດຂອງໂຕເປັນຫຼັກ, ຊ້າຍຈັດ. ການຖາມຄວາມເຫັນຂອງປະຊາຊົນກໍມີຫຼາຍວິທີເວົ້າ, ເວົ້າລົມນຳແຕ່ລະຄົນ, ລົມນຳຫຼາຍຄົນພ້ອມກັນ, ເປີດກອງປະຊຸມ, ເວົ້າລົມນຳຊົນຊັ້ນນີ້ ເວົ້າລົມນຳຊົນຊັ້ນນັ້ນ, ເວົ້າລົມນຳໝົດທຸກຊົນຊັ້ນລວມກັນ ດັ່ງນັ້ນ ຈຶ່ງແມ່ນວິທີຖາມຄຳເຫັນນຳປະຊາຊົນນັ້ນ, ເວົ້າລົມນຳໝົດທຸກຊົນຊັ້ນລວມກັນ ດັ່ງນັ້ນ ຈຶ່ງແມ່ນວິທີຖາມຄຳເຫັນນຳປະຊາຊົນ ຖ້າພວກເຮົາອົດທົນທຸກຍາກອົດທົນພິຈາລະນາແລ້ວ ແມ່ນຈະເວົ້າລົມນຳໃຜກໍລ້ວນແຕ່ເປັນປະໂຫຍດໃຫ້ແກ່ຄວາມນຶກຄິດຂອງພວກເຮົາ.

ອ່ານຕໍ່ສະບັບໜ້າ...

# ສ້າງຄວາມເຂັ້ມແຂງດ້ານພາວະການເປັນຜູ້ນຳ




(ສພຊ)-ເພື່ອສ້າງຄວາມເຂັ້ມແຂງດ້ານພາວະການເປັນຜູ້ນຳ, ການຄຸ້ມຄອງສຳເນົາເອກະສານ, ການຮ່າງເອກະສານ ທາງລັດຖະການແລະມາລະຍາດທາງສັງຄົມ-ມາລະຍາດສາກົນ ໃຫ້ແກ່ພະນັກງານສະພາແຫ່ງຊາດ ແລະສະພາປະຊາຊົນຂັ້ນແຂວງ; ວັນທີ7-9ຕຸລາຜ່ານມາທີ່ເມືອງແກ້ວອຸດົມ ແຂວງວຽງຈັນ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ(ສນສ) ໄດ້ຈັດກອງປະຊຸມເຝິກອົບຮົມໃນຫົວຂໍ້ດັ່ງກ່າວ ໂດຍການເປັນປະທານຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ເຊິ່ງມີຮອງຫົວໜ້າ ສນສ, ວິທະຍາກອນຈາກມະຫາວິທະຍາໄລແຫ່ງຊາດ, ກະຊວງພາຍໃນ ແລະກະຊວງການຕ່າງປະເທດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມ, ສຳມະນາກອນໄດ້ຮຽນຮູ້ກ່ຽວກັບພາວະການເປັນຜູ້ນຳ ຈາກທ່ານ ຣສ. ປອ. ບົວຄຳ ແສງຄຳຄູດລາວົງ ອະດີດຫົວໜ້າຫ້ອງການມະຫາວິທະຍາໄລແຫ່ງຊາດ ເຊິ່ງມີບາງຕອນວ່າ: ຜູ້ນຳ(Leader)ແມ່ນບຸກຄົນທີ່ສາມາດ ນຳພາກຸ່ມໄປໃນທາງທີ່ຕ້ອງການ ໂດຍໃຊ້ອິດທິພົນ ຫຼື ຄວາມສາມາດຈູງໃຈໃຫ້ຜູ້ຕາມປະຕິບັດຕາມຄວາມເຫັນຂອງຕົນ ເພື່ອໃຫ້ບັນລຸຈຸດປະສົງຂອງກຸ່ມໃນສະຖານະການໃດໜຶ່ງ; ພາວະຜູ້ນຳ ໝາຍເຖິງສະພາວະການທີ່ບຸກຄົນໃດໜຶ່ງໃຊ້ອິດທິພົນຂອງຕົນຊີ້ນຳກະຕຸກຊຸກຍູ້ບຸກຄົນ ຫຼື ກຸ່ມຄົນ ໃຫ້ມີຄວາມເຕັມໃຈ ແລະ ກະຕືລືລົ້ນໃນການປະຕິບັດວຽກງານຈົນບັນລຸ ຈຸດປະສົງຂອງກຸ່ມ; ຜູ້ນຳເປັນທັງຫົວໜ້າ, ເປັນທັງຕົວແທນ, ເປັນທັງສັນຍະລັກ, ເປັນທັງຄັນທຸງເຕົ້າໂຮມຄວາມສາມັກຄີ ຄວາມເປັນນ້ຳໜຶ່ງໃຈດຽວຂອງບຸຄະລາກອນ ເພື່ອພ້ອມກັນເຮັດສຳເລັດໜ້າທີ່ຂອງໜ່ວຍງານ. ດັ່ງນັ້ນ, ຜູ້ນຳຈຶ່ງມີບົດບາດສຳຄັນທີ່ຈະນຳພາໜ່ວຍງານໄປສູ່ການບັນລຸຈຸດປະສົງເປົ້າໝາຍທີ່ວາງໄວ້. ນອກນັ້ນ, ຍັງໄດ້ຮຽນຮູ້ການຄຸ້ມຄອງ-ສຳເນົາເອກະສານ ແລະ ການຮ່າງເອກະສານທາງການ ຈາກທ່ານ ແສງດາວເດດ ກັດຕິຍະສັກຮອງຫົວໜ້າກົມເອກະສານແຫ່ງຊາດ, ກະຊວງພາຍໃນ; ການສ້າງທີມງານແລະການສື່ສານ ຈາກທ່ານ ພອນໄຊປານ ສີວົງໄຊ ຫົວໜ້າພະແນກຝຶກອົບຮົມ, ສະຖາບັນຄົ້ນຄວ້າວິທະຍາສາດການເມືອງ ແລະ ຝຶກອົບຮົມ, ກະຊວງພາຍໃນ.

ພິທີປິດກອງປະຊຸມ, ທ່ານ ສິນທະລາ ຫຼ້າສຸກສະໄໝ ມີຄຳເຫັນວ່າ: ບັນດາຫົວຂໍ້ທີ່ນຳມາເຝິກອົບຮົມຄັ້ງນີ້ ແມ່ນຖືກຕ້ອງ ແລະ ມີຄວາມສຳຄັນ, ຈຳເປັນສຳລັບພະນັກງານວິຊາການຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທີ່ຕ້ອງໄດ້ຮຽນຮູ້ເພື່ອເປັນວິທີພື້ນຖານໃນການພັດທະນາຕົນເອງໃຫ້ມີຄວາມກ້າວໜ້າໃນອະນາຄົດ. ໃນ 3 ຫົວຂໍ້ທີ່ນຳມາເຝິກອົບຮົມຄັ້ງນີ້ ຕ້ອງເອົາໃຈໃສ່ຫົວຂໍ້ທັກສະພາວະຄວາມເປັນຜູ້ນຳທີ່ດີເຊິ່ງຜູ້ນຳທີ່ດີຕ້ອງປະຕິບັດໃຫ້ໄດ້6ຢ່າງ, 5 ທັກສະ ແລະ 9 ແນວຄິດທີ່ຄວນຕ້ານ; 6 ຢ່າງຄື: 1. ກຳແໜ້ນດ້ານຫຼັກການ, 2. ນຳພາລວມສູນປະຊາທິປະໄຕ, 3. ເດັດດ່ຽວ ແລະ ເດັດຂາດຕໍ່ບັນຫາ, 4. ມີເຫດ ແລະ ມີຜົນ, 5. ມີໄຫວພິບ ແລະ6. ຈິງໃຈ; 5 ທັກສະຄື: 1. ເຂົ້າໃຈຈຸດແຂງ, ຈຸດອ່ອນຂອງແຕ່ລະຄົນ ແລະ ຮູ້ວິທີແກ້ໄຂ, 2. ການເວົ້າແລະສ້າງແຮງຈູງໃຈໃຫ້ພະນັກງານເຕັມໃຈເຮັດວຽກ, 3. ການມອບໝາຍວຽກໃຫ້ຊັດເຈນ, 4. ຕິດຕາມ ແລະ ຊຸກຍູ້ວຽກ ແລະ 5. ໃຫ້ບາງອັນ ຫຼື ສ້າງສິ່ງຈູງໃຈ; 9 ແນວຄິດຕ້ານຄື: 1. ແນວຄິດໂລບມາກໂລພາ, 2. ແນວຄິດຂີ້ຄ້ານ, 3. ແນວຄິດອວດອົ່ງ, 4. ແນວຄິດຕັນຫາຊື່ສຽງ, 5. ແນວຄິດຂາດລະບຽບວິໄນ, 6. ແນວຄິດຄັບແຄບ, 7. ແນວຄິດອາຍາສິດ, 8. ແນວຄິດເອກະຊົນ ແລະ9. ແນວຄິດສວຍໂອກາດ.

**(ບຸນເກີດ ວົງໄຊຍາ)**

## ອາດ ກະວີລາວ

# ບຸນຊ່ວງເຮືອ

**# ປາຍປາກການ້ອຍ**

❈ ສິບເອັດເພັງແມ່ນມື້
ຊາວພຸດພາກັນໂຮມ
ເປັນໝູ່ຊຸມນຸມໄຫວ້
ເປັນຂະບວນຄຶກຄື້ນ

ບຸນອອກພັນສາ
ຫຼັ່ງໄຫຼຕອມຕຸ້ມ
ສະແຫວງບຸນກຸສົນຮ່ວມ
ກຽມພ້ອມເຮັດບຸນ

❈ ຊາວໜຸ່ມແຊວໂຮຮ້ອງ
ເພື່ອສະຫຼອງລະດູການ
ເອົາໃສ່ເຍຍຂຶນໄວ້
ມະໂນໃນຊື່ນຊ້ອຍ

ແຄມຝັ່ງເຊຍເຮືອ
ກ່ຽວກຳກຳເຂົ້າ
ສະຫຼອງງານບຸນໃຫຍ່
ສຸກລົ້ນຊື່ນພະໄທ

❈ ເວລາໄດ້ຜ່ານພົ້ນ
ນາວາຄຽງອາໂປ
ສີພາຍພາກັນຈ້າວ
ບໍ່ຫວັ່ນໄຫວຢ່ອນຢ້ານ

ຄົບຂວບພັນສາ
ແຂ່ງຂັນກຳລັງກ້າ
ສາມັກຄີຍໍຍັ່ນ
ແລວນ້ຳສັ່ນສະເທືອນ ມ່ວນເດ !

❈ ແຄມເຊ-ຂອງໂຮຮ້ອງ
ໃຫ້ສີພາຍເຮືອຕົນ
ບ່າວສາວແຊວໂຢະຢ້ອນ
ນອງນັນດັງກຶກກ້ອງ

ສະຫຼອງສິ່ງກຳລັງໃຈ
ຊ່ວງເສັງກັນຈ້າວ
ຊົມເຊີຍເຊຍສະໜັ່ນ
ສຽງຮ້ອງຢອກໄຍ

❈ ຮັກສາສານສືບໄວ້
ປະເພນີແຂ່ງຂັນເຮືອ
ວັດທະນະທຳປະຈຳບ້ານ
ເອກະລັກເອກອ້າງ

ຮີດເກົ່າປາງຫຼັງ
ຄູ່ຄອງເມືອງບ້ານ
ແດນດິນຊາວພຸດ
ຄົງໄວ້ຊື່ລາວ ນີ້ແລ້ວ !

## ຮອງປະທານ...

(ຕໍ່ຈາກໜ້າ 1)

ສປປລາວແລະລັດຖະສະພາລາຊະອານາຈັກໄທ ເປັນສະບັບທຳອິດທີ່ເຊັນໃນເດືອນຕຸລາ2022 ເຊິ່ງມີໝາກຜົນສຳເລັດອັນຈົບງາມ ເປັນຕົ້ນ: ສອງຝ່າຍໄດ້ແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນຕ່າງໆ; ແລກປ່ຽນບົດຮຽນ, ປະສົບການ ແລະ ຂໍ້ມູນຂ່າວສານ ໃນການຈັດຕັ້ງປະຕິບັດພາລະບົດບາດອົງການນິຕິບັນຍັດເປັນແຕ່ລະໄລຍະ; ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະສາກົນ; ຊຸກຍູ້ລັດຖະບານສອງປະເທດ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ຂໍ້ຕົກລົງທີ່ຮ່ວມກັນລົງນາມ ໃຫ້ເປັນຮູບປະທຳແລະມີປະສິດທິຜົນ.

ໃນການຮ່ວມມືໃນຕໍ່ໜ້າ, ສອງຝ່າຍໄດ້ສະເໜີບາງເນື້ອໃນຈິດໃຈເພື່ອນຳໄປຄົ້ນຄວ້າຜັນຂະຫຍາຍເຂົ້າສູ່ລວງເລິກໃນການພົວພັນຮ່ວມມືຕື່ມບາງດ້ານຄື: ແລກປ່ຽນການຢ້ຽມ ຢາມ, ເຮັດວຽກ ແລະຖອດຖອນບົດຮຽນນຳກັນໃຫ້ຫຼາຍຂຶ້ນ ກ່ຽວກັບວຽກງານການທ່ອງທ່ຽວ, ການພັດທະນາສີມືແຮງງານກຳຄືອາຊີວະສຶກສາ, ການປະກັນສຸຂະພາບ ໂດຍສະເພາະນະໂຍບາຍກ່ຽວກັບ 30 ບາດ ຮັກສາທຸກພະຍາດ.

**(ນາງ ກຸກກິກ ບຸດດາໄຊ)**



## ຜ້າຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສົ້ນມຫຼຽນ**

❈ **ຈົມ**ເຊີຍຜົນສຳເລັດກອງຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ທີ່ໄດ້ສຳເລັດເສັດສິ້ນໃນວັນທີ 21 ຕຸລານີ້ ແລະ ໃນຄັ້ງຕໍ່ໄປ ເຈົ້າພາບໄອປາ 46 ແມ່ນເບື້ອງປະເທດມາເລເຊຍ ມີສຽງເຊຍຍົກຍ້ອງ ຈົມຊື່ນຍິນດີ ມີຫຼາຍບັນຫາ ຜ່ານເປັນຍັດຕິໄດ້ ພ້ອມພ່າປະຕິບັດໃຊ້ ເດີນໄປຕາມແລວປ່ອງ ລັດຖະສະພາຊຸກຍູ້ ຈະເລີນກ້າວແບບກອມລອມ (ອາຊຽນ) **ນັ້ນແລ້ວ !**

❈ **ຊ່າວ**ແລ້ງວ່າ ໄລຍະນີ້ອາກາດຈະເຢັນລົງ 2-3 ອົງສາ ແລະ ມີຝົນຕົກລະດັບຄ່ອຍຫາປານກາງຢູ່ທາງພາກກາງຫາພາກໃຕ້ ຍ້ອນຄວາມກົດດັນອາກາດເຢັນຈາກປະເທດຈີນແຜ່ມາປົກຫຸ້ມ ອາໄສຍ່າວຍອກຍູ້ ຜັດປ່ຽນລະດູການ ຂໍໃຫ້ປວງປະຊາເຮົາ ເບິ່ງແຍງດູແລໄວ້ ຮັກສາສຸຂະພາບໃຫ້ ຕົນເອງທັງຄົນໃກ້ຊິດ ບ່າເດີ ! ກຽມສະໄບຜ້າຕຸ້ມກາຍາໃຫ້ອຸ່ນຄືງ **ພີ່ນ້ອງເອີຍ !**

## ຊອບຍິ້ມ

*# ແອ່ບຕຸ້ງ*

### ເລື່ອງ: ມາຊ້າ

ທີ່ຮ້ານຂາຍເຄື່ອງແຫ່ງໜຶ່ງ ລູກຄ້າທີ່ມາຊື້ເຄື່ອງຕ້ອງໄດ້ຖ້າພະນັກງານທຸກຄັ້ງ ຈົນມີລູກຄ້າທ່ານໜຶ່ງໃຈຮ້າຍ ຈຶ່ງຖາມໄປດ້ວຍຄວາມໃນໃຫວ່າ: "ເປັນຫຍັງຄືມາຊ້ານແທ້"

ພະນັກງານຈຶ່ງຫັນໜ້າໄປຫາ ພ້ອມທັງຊີ້ມືໄປໃສ່ປ້າຍທີ່ຕິດໄວ້ຝາຮ້ານວ່າ: "ບໍລິການທີ່ດີ ລູກຄ້າຕ້ອງມາກ່ອນສະເໝີ"



## ຄະຕິເຕືອນໃຈ

*#ດອກຫຍ້າ*

| | |
|---|---|
| ເຫຼົ້າກົດ | ເອົາໄວ້ເຮັດຊ່ |
| ເຫຼົ້າກ່ | ເອົາໄວ້ເຮັດກ່ຽວ |
| ຄົບຄົດລ້ຽວ | ເອົາໄວ້ບໍ່ດີ |

# ລັດຖະສະພາລັດເຊຍ ອະນຸມັດການເກນທະຫານຊາວຕ່າງປະເທດເຂົ້າກອງທັບ

ລັດຖະສະພາຕ່າງປະເທດ



(Xinhua)-ວັນພະຫັດທີ 10 ຕຸລາຜ່ານມາ, ລັດຖະສະພາລັດເຊຍ ໄດ້ຜ່ານຮ່າງກົດໝາຍສະບັບປັບປຸງ ເພື່ອເປີດທາງໃຫ້ສາມາດເກນທະຫານຊາວຕ່າງປະເທດເຂົ້າກອງທັບຂອງປະເທດໄດ້.

ອີງຕາມການລາຍງານຂອງສຳນັກຂ່າວລັດຖະສະພາ, ລະບຽບການໃໝ່ນີ້ ອະນຸຍາດໃຫ້ເກນທະຫານເຂົ້າກອງທັບໄດ້ໃນກໍລະນີທີ່ມີການລະເມີດຜົນທັງໝົດ ຫຼື ບາງສ່ວນ ດ້ວຍການຂະຫຍາຍສິດໃຫ້ລວມເອົາພົນລະເມືອງຂອງບັນດາປະເທດສະມາຊິກສະຫະພາບເອີຣົບ (EU), ສະມາຄົມການຄ້າເສລີເອີຣົບ (European Free Trade Association - EFTA), ປະເທດສະມາຊິກ NATO ລວມທັງອິດສະຕຣາລີ, ບຣາຊິນ, ນູແວນເຊລັງ ແລະ ອູແກຣນ.

ພາຍໃຕ້ກົດໝາຍສະບັບປັບປຸງໃໝ່ນີ້, ລູກຈ້າງ ຫຼື ຕົວແທນຂອງອົງການຄວາມໝັ້ນຄົງ, ອົງການສືບລັບ ຫຼື ອົງການຕ້ານການສືບລັບຂອງຕ່າງປະເທດ ບໍ່ມີສິດເຂົ້າຮ່ວມກອງທັບລັດເຊຍ; ນອກຈາກນັ້ນ, ສັນຍາການຮັບໃຊ້ກອງທັບອາດຈະຖືກຍົກເລີກ ກ່ອນກຳນົດ ຫາກທະຫານຖືສອງສັນຊາດກັບປະເທດທີ່ບໍ່ລວມຢູ່ໃນບັນຊີລາຍຊື່ລັດທີ່ໄດ້ຮັບການອະນຸມັດ.

# ກົດໝາຍໃໝ່ຂອງຄາລິຟໍເນຍ ຈະປະຕິຮູບການສຶກສາຊັ້ນສູງ




(Xinhua)-ຄາລິຟໍເນຍ ກາຍເປັນລັດທີສອງໃນສະຫະລັດອາເມລິກາ ທີ່ຫ້າມການໃຫ້ສິດພິເສດໃນການຮັບເຂົ້າຮຽນແກ່ຜູ້ສືບທອດ (legacy) ແລະ ຜູ້ບໍລິຈາກ ໃນວິທະຍາໄລທັງພາກລັດ ແລະ ເອກະຊົນ ເຊິ່ງຖືເປັນການປ່ຽນແປງຄັ້ງສຳຄັນໃນພູມິທັດຂອງການເຂົ້າເຖິງການສຶກສາຊັ້ນສູງໃນສະຫະລັດ.

ວັນຈັນທີ 30 ກັນຍາຜ່ານມາ, ທ່ານ ກາວິນ ນິວຊຳ (Gavin Newsom) ເຈົ້າຄອງລັດຄາລິຟໍເນຍ ໄດ້ລົງນາມໃນຮ່າງກົດໝາຍ 1780 ເຊິ່ງຫ້າມສະຖາບັນເອກະຊົນທີ່ບໍ່ຫວັງຜົນກຳໄລ ພິຈາລະນາຄວາມສຳພັນທາງຄອບຄົວຂອງຜູ້ສະໝັກກັບອະດີດນັກສຶກສາ (ສິດເກົ່າ - alumni) ຫຼື ຜູ້ບໍລິຈາກ ໃນການຕັດສິນໃຈຮັບເຂົ້າຮຽນ; ກົດໝາຍດັ່ງກ່າວຈະມີຜົນສັກສິດໃນເດືອນກັນຍາ 2025 ມີຈຸດປະສົງເພື່ອສ້າງຄວາມສະເໝີພາບໃຫ້ແກ່ຜູ້ສະໝັກເຂົ້າຮຽນໃນວິທະຍາໄລ ແລະ ຊຸກຍູ້ສົ່ງເສີມການຮັບເຂົ້າຮຽນຕາມຄຸນສົມບັດ.

ທ່ານ ນິວຊຳ ກ່າວໃນຖະແຫຼງການວ່າ: "ໃນລັດຄາລິຟໍເນຍ ທຸກຄົນຄວນຈະສາມາດກ້າວໜ້າໄດ້ໂດຍຜ່ານຄຸນສົມບັດ, ທັກສະ ແລະ ການເຮັດວຽກໜັກ; ຄວາມຝັນແບບຄາລິຟໍເນຍ ບໍ່ຄວນຈະເຂົ້າເຖິງໄດ້ສະເພາະກັບຜູ້ໂຊກດີຈຳນວນໜ້ອຍດຽວເທົ່ານັ້ນ. ນັ້ນແມ່ນເຫດຜົນທີ່ພວກເຮົາເປີດປະຕູສູ່ການສຶກສາຊັ້ນສູງຢ່າງກວ້າງຂໍສຳລັບທຸກຄົນຢ່າງຍຸຕິທຳ."

ການຫ້າມນີ້ ຈະສົ່ງຜົນກະທົບຕໍ່ມະຫາວິທະຍາໄລເອກະຊົນທີ່ມີຊື່ສຽງຫຼາຍແຫ່ງໃນລັດ ລວມເຖິງມະຫາວິທະຍາໄລ Stanford ແລະ ມະຫາວິທະຍາໄລ University of Southern California ຫຼື USC ເຊິ່ງໃນອະດີດໄດ້ຮັບຜູ້ສະໝັກທີ່ເປັນຜູ້ສືບທອດຈຳນວນຫຼາຍ.

ທ່ານ ຟິວ ຕິງ (Phil Ting) ສະມາຊິກສະພາຜູ້ແທນປະຊາຊົນລັດຄາລິຟໍເນຍ ຜູ້ຮ່າງກົດໝາຍສະບັບນີ້ເນັ້ນໜັກເຖິງຄວາມສຳຄັນຂອງຂະບວນການຮັບເຂົ້າຮຽນທີ່ຍຸຕິທຳ ແລະ ສະເໝີພາບ. "ການເຮັດວຽກໜັກ, ຄະແນນທີ່ດີແລະພື້ນຖານຄວາມສາມາດຫຼາຍດ້ານ ຄວນຈະຊ່ວຍໃຫ້ທ່ານ ໄດ້ເຂົ້າຮຽນໃນຫ້ອງຮຽນໃໝ່, ບໍ່ແມ່ນວ່າຈຳນວນເງິນທີ່ຄອບຄົວຂອງທ່ານສາມາດຈ່າຍໄດ້ຫຼາຍປານໃດ ຫຼື ຍາດພີ່ນ້ອງຂອງທ່ານເປັນໃຜ."

ພາຍໃຕ້ກົດໝາຍໃໝ່, ວິທະຍາໄລ ແລະ ມະຫາວິທະຍາໄລເອກະຊົນທັງໝົດໃນລັດ ຈະຕ້ອງສົ່ງບົດລາຍງານປະຈຳປີເພື່ອເປີດເຜີຍການປະຕິບັດຕາມກົດໝາຍ; ຜູ້ລະເມີດຕ້ອງລາຍງານອັດຕາການຮັບເຂົ້າຮຽນຂອງນັກສຶກສາທີ່ມີສາຍພົວພັນກັບຜູ້ສືບທອດ ແລະ ຜູ້ບໍລິຈາກ ທຽບກັບນັກສຶກສາຄົນອື່ນໆ ແລະ ຕ້ອງໃຫ້ຂໍ້ມູນກ່ຽວກັບຄວາມຫຼາກຫຼາຍທາງດ້ານເຊື້ອຊາດ, ພູມສັນຖານ ແລະ ການເງິນຂອງນັກສຶກສາທີ່ຖືກຮັບເຂົ້າຮຽນ.

ການຫ້າມຂອງລັດຄາລິຟໍເນຍ ເປັນສ່ວນໜຶ່ງຂອງທ່າອຽງທີ່ກຳລັງເພີ່ມຂຶ້ນໃນທົ່ວປະເທດ. Maryland ໄດ້ກາຍເປັນລັດທຳອິດທີ່ຫ້າມການຮັບເຂົ້າຮຽນແບບດັ້ງເດີມໃນວິທະຍາໄລຂອງລັດແລະເອກະຊົນເມື່ອຕົ້ນປີນີ້; ໃນເວລາດຽວກັນ, Colorado, Virginia ແລະ Illinois ໄດ້ຜ່ານຂໍ້ຫ້າມທີ່ຄ້າຍຄືກັນທີ່ນຳໃຊ້ກັບມະຫາວິທະຍາໄລຂອງລັດເທົ່ານັ້ນ.



## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ)-ວັນທີ 18 ຕຸລາຜ່ານມານີ້ທີ່ສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການຢ້ຽມຂໍ່ານັບຂອງທ່ານ ໂຊລບັນ ກາຣາ-ໂອລ (Sholban Kara-ool) ຮອງປະທານສະພາດູມາ (ສະພາຕໍ່າ) ແຫ່ງ ສະຫະພັນລັດເຊຍ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໃນຖານະເປັນລັດຖະສະພາສັງເກດການໄອປາ.

ທ່ານ ປອ. ໄຊສົມພອນ ພົມວິຫານ ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງທີ່ໄດ້ຕ້ອນຮັບ ພ້ອມທັງຕີລາຄາສູງຕໍ່ການເດີນທາງມາເຂົ້າຮ່ວມກອງປະຊຸມໄອປາ ຄັ້ງທີ 45 ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ລາວ-ລັດເຊຍ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະເປັນຮູບປະທຳຂຶ້ນເລື້ອຍໆ ໂດຍສະເພາະແມ່ນການຮ່ວມມື ແລະ ການສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ທ່ານ ໂຊລບັນ ກາຣາ-ໂອລ ໄດ້ສະແດງຄວາມຂອບໃຈຕໍ່ທ່ານປະທານສະພາແຫ່ງຊາດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ແຈ້ງສະພາບການພົ້ນເດັ່ນ ໂດຍຫຍໍ້ໃນການພັດທະນາເສດຖະກິດ-ສັງຄົມໃນໄລຍະທ້າຍຂອງສະຫະພັນລັດເຊຍ.

ວັນດຽວກັນ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາລາວ-ລັດເຊຍ ກໍໄດ້ພົບປະກັບທ່ານຮອງປະທານສະພາດູມາ. ໃນການພົບປະ, ສອງຝ່າຍໄດ້ສະເໜີໃຫ້ສືບຕໍ່ແລກປ່ຽນການຢ້ຽມຢາມລະຫວ່າງຄະນະຜູ້ແທນຂັ້ນສູງ, ຂັ້ນກຳມາທິການ ແລະ ຄະນະມິດຕະພາບລັດຖະສະພາ ຢ່າງປົກກະຕິ ທີ່ຕິດພັນກັບການແລກປ່ຽນບົດຮຽນການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ; ສະເໜີໃຫ້ສອງລັດຖະບານສືບຕໍ່ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງ ທີ່ລັດຖະບານຂອງສອງປະເທດໄດ້ລົງນາມຮ່ວມກັນ ໃຫ້ເປັນຮູບປະທຳຂຶ້ນກວ່າເກົ່າ ແລະ ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການຕ່າງໆຂອງລັດເຊຍທີ່ມາລົງທຶນຢູ່ ສປປ ລາວ ໃຫ້ສຳເລັດຕາມແຜນການ ແລະ ນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງຊາດຢ່າງແທ້ຈິງ; ສືບຕໍ່ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ອາລິນ ສຸພົມມະປະດິດ)**

## ກອດກາເນື້ອໃນ...

(ຕໍ່ຈາກໜ້າ 2)

ທ່ານ ສົມມາດ ພົລເສນາ ມີຄຳເຫັນກ່າວປິດວ່າ: ຕະຫຼອດໄລຍະດຳເນີນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ເປັນເຈົ້າການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຕໍ່ບັນດາເນື້ອໃນຮ່າງກົດໝາຍສະບັບນີ້ ຢ່າງມີຈຸດສຸມ, ມີລັກສະນະຫຼັກການຕິດພັນກັບການຈັດຕັ້ງປະຕິບັດຕົວຈິງ; ມີຄຳເຫັນລົງເລິກແຕ່ລະພາກ, ໝວດ, ມາດຕາໃນນັ້ນ, ມີຫຼາຍເນື້ອໃນຂອງຫຼາຍມາດຕາ ໄດ້ຮັບການປັບປຸງໃຫ້ມີຄວາມຄົບຖ້ວນ ຮັດກຸມ ແລະ ຊັດເຈນກວ່າເກົ່າ ແຕ່ເພື່ອຄວາມເປັນເອກະພາບດ້ານຫຼັກການ ຈຶ່ງມີມາດຕາຈຳນວນໜຶ່ງໃຫ້ສືບຕໍ່ລາຍງານກອງປະຊຸມຄະນະປະຈຳສະພາແຫ່ງຊາດຕື່ມ ກ່ອນຕົກລົງນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະມາເຖິງນີ້.

**(ນາງ ອາລິນ ສຸພົມມະປະດິດ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ, ປະທານໄອປາ 45 ພ້ອມດ້ວຍບັນດາທ່ານຫົວໜ້າຄະນະຜູ້ແທນໄອປາ, ສະມາຊິກລັດຖະສະພາເພດຍິງ ແລະ ແຂກຖືກເຊີນ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຢືນຢັນເຖິງຄວາມສຳຄັນຂອງກອງປະຊຸມໄອປາ ເພາະເປັນເວທີທີ່ມີຄວາມໝາຍສຳຄັນຂອງສະມາຊິກລັດຖະສະພາເພດຍິງຂອງບັນດາປະເທດສະມາຊິກອາຊຽນ ເພື່ອຍົກສູງບົດບາດ, ສົ່ງເສີມຄວາມສະເໝີພາບຍິງ-ຊາຍ, ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ພັດທະນາຄວາມກ້າວໜ້າຂອງແມ່ຍິງໃນເວທີການເມືອງຂອງພາກພື້ນ ແລະສາກົນຫຼາຍຂຶ້ນດ້ວຍການສ້າງນິຕິກຳ ແລະ ກົນໄກຕ່າງໆ; ທ່ານຍັງໄດ້ເນັ້ນໜັກອີກວ່າ: ກອງປະຊຸມໄອປາຄັ້ງນີ້ ຈະເປັນການສານຕໍ່ປະເພນີທີ່ໄດ້ປະຕິບັດຜ່ານມາແລະບັນດາຜູ້ແທນຈະພ້ອມກັນປຶກສາຫາລືກັນ ດ້ວຍຄວາມຮັບຜິດຊອບ ແລະ ຢ່າງສ້າງສັນຕາມວິຖີຂອງໄອປາ ເພື່ອເຮັດໃຫ້ກອງປະຊຸມໄອປາຄັ້ງນີ້ ປະສົບຜົນສຳເລັດຕາມຈຸດປະສົງ ແລະລະດັບຄາດໝາຍທີ່ວາງໄວ້.

ໃນກອງປະຊຸມ ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນເຊິ່ງກັນແລະກັນແລະຊອກຫາວິທີທາງຮ່ວມກັນ ໃນບັນຫາທີ່ພົວພັນເຖິງບົດບາດຂອງເພດຍິງໃນສັງຄົມ ພ້ອມທັງຜ່ານຮ່າງມະຕິກ່ຽວກັບການສົ່ງເສີມລັດຖະສະພາທີ່ເອົາໃຈໃສ່ບົດບາດຍິງ-ຊາຍເພື່ອປະຊາຄົມອາຊຽນທີ່ເຂັ້ມແຂງ, ເຊື່ອມຈອດ ແລະ ກວມລວມ; ຮ່າງມະຕິກ່ຽວກັບການສົ່ງເສີມການລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງຂອງອາຊຽນ.

**(ນາງ ອາລິນ ສຸພົມມະປະດິດ)**

## ກອດກາ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນເຊົ້າວັນທີ 17 ຕຸລາ 2024 ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ, ປະທານໄອປາ ພ້ອມດ້ວຍຄະນະເຊິ່ງປະກອບມີທ່ານຮອງປະທານສະພາແຫ່ງຊາດ, ທ່ານຫົວໜ້າອະນຸກຳມະການເຕັກໂນໂລຊີ, ຂໍ້ມູນຂ່າວສານ ແລະ ສື່ມວນຊົນ ແລະພາກສ່ວນທີ່ກ່ຽວຂ້ອງ ໄດ້ລົງກວດກາສະຖານທີ່ຢູ່ຫໍປະຊຸມແຫ່ງຊາດ ເຊິ່ງຈະເປັນບ່ອນຈັດກອງປະຊຸມໄອປາ ຄັ້ງທີ 45 ທີ່ ສປປ ລາວ ເປັນເຈົ້າພາບ ເພື່ອກວດກາຄວາມພ້ອມທາງດ້ານສະຖານທີ່ຫ້ອງປະຊຸມ, ຫ້ອງອາຫານ, ສະຖານທີ່ຮັບປະທານອາຫານວ່າງ, ສູນຂ່າວ ແລະ ອື່ນໆ ເຊິ່ງເຫັນໄດ້ວ່າມີຄວາມພ້ອມແລ້ວ.

# ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ເລື່ອງຄວນຮູ້ກ່ຽວກັບມົນລະພິດ ແລະ ມາດຕະການດ້ານແຮງງານຢູ່ຕ່າງປະເທດ

ພົບກັນປະຈຳສະບັບນີ້ ມີຂ່າວກ່ຽວກັບການແກ້ໄຂມົນລະພິດແບບງ່າຍໆຈາກອິນເດຍ ແລະ ຂ່າວກ່ຽວກັບມາດຕະການຊົ່ວຄາວເພື່ອຈຳກັດແຮງງານຕ່າງປະເທດຢູ່ການາດາ ຂໍເລີ່ມດ້ວຍຂ່າວຈາກ**ປະເທດອິນເດຍ**ທີ່ບອກວ່າຫ້ອງການສິ່ງແວດລ້ອມ ປະຈຳນະຄອນຫຼວງນິວເດລີ ໄດ້ອອກປະກາດໃນຕົ້ນເດືອນກັນຍາປີນີ້ວ່າອົງການປົກຄອງນະຄອນຫຼວງນິວເດລີໄດ້ອອກຄຳສັ່ງຫ້າມການຜະລິດ, ການເກັບຮັກສາ, ການຈຳໜ່າຍບັ້ງໄຟດອກ ຄຳສັ່ງຫ້າມນີ້ ມີເປົ້າໝາຍຄວບຄຸມມົນລະພິດທາງອາກາດທີ່ມັກຈະລະບາດເປັນວົງກວ້າງໃນໄລຍະໄຕມາດສຸດທ້າຍຂອງປີ ຮອດເດືອນມັງກອນຂອງປີຕໍ່ໄປ ຄຳສັ່ງຫ້າມແບບນີ້ປະຕິບັດກັນມາ 5 ປີລຽນຕິດມາແລ້ວ; ຊາວອິນເດຍ ນິຍົມຊົມຊອບຈູດບັ້ງໄຟດອກ ເພື່ອສະເຫຼີມສະຫຼອງເທສະການບຸນ “ດີວາລີ” ຫຼື ເອີ້ນວ່າ “ບຸນແສງ” ຂອງສາສະໜາຮິນດູ. ແຕ່ຄວາມງົດງາມພິດສະດານຈາກບັ້ງໄຟດອກນັ້ນ ຊ້ຳພັດມາພ້ອມໆກັບຄວັນພິດທີ່ເພີ່ມມົນລະພິດໃນນະຄອນຫຼວງໜັກຂຶ້ນ. ນະຄອນຫຼວງນິວເດລີເປັນເມືອງໃຫຍ່ໜຶ່ງໃນໂລກທີ່ປະເຊີນກັບມົນລະພິດຫຼາຍທີ່ສຸດ.

ຕໍ່ໄປແມ່ນຂ່າວຈາກ**ການາດາ** ທີ່ບໍ່ຄ່ອຍດີສຳລັບແຮງງານຕ່າງປະເທດ ເນື່ອງຈາກວ່າທາງການຂອງປະເທດນີ້ໄດ້ປະກາດປັບປຸງນະໂຍບາຍຄົນເຂົ້າເມືອງໃຫ້ເຄັ່ງຄັດຮັດກຸມແລະອອກກົດລະບຽບສະບັບໃໝ່ ເພື່ອຈຳກັດແຮງງານຕ່າງປະເທດ. ກົດລະບຽບໃໝ່ນີ້ ຫ້າມອອກໃບອະນຸຍາດໃຫ້ແຮງງານຕ່າງປະເທດ ໃນບັນດາວຽກທີ່ໄດ້ຄ່າແຮງງານຕ່ຳ ໃນບັນດາຕົວເມືອງທີ່ມີອັດຕາການວ່າງງານແຕ່ 6% ຂຶ້ນໄປ (ໝາຍຄວາມວ່າວຽກທີ່ໄດ້ຄ່າແຮງງານຕ່ຳເຫຼົ່ານີ້ ຈະສະຫງວນໄວ້ໃຫ້ຊາວການາດາເອງເຮັດ). ໃບອະນຸຍາດໃຫ້ແຮງງານຕ່າງປະເທດເຮັດວຽກຄ່າແຮງງານຕ່ຳນີ້ ເມື່ອກ່ອນແມ່ນມີອາຍຸ 2 ປີ ແຕ່ຕໍ່ໄປຈະຫຼຸດລົງເຫຼືອພຽງ 1 ປີຍົກເວັ້ນວຽກຄ່າແຮງງານຕ່ຳໃນບາງຂະແໜງການເຊັ່ນ: ກະສິກຳ, ສາທາລະນະສຸກ ແລະ ວຽກກໍ່ສ້າງ. ໃນເມື່ອກ່ອນບັນດານາຍຈ້າງສາມາດວ່າຈ້າງແຮງງານຕ່າງປະເທດໄດ້ 20% ຂອງຈຳນວນແຮງງານທັງໝົດ, ແຕ່ພາຍໃຕ້ກົດລະບຽບໃໝ່ ຈະວ່າຈ້າງໄດ້ພຽງ 10%. ຂ່າວບອກວ່າສາເຫດທີ່ມາດຕະການຈຳກັດແຮງງານຕ່າງປະເທດແມ່ນຍ້ອນມີບັນຫາວ່າງງານທີ່ເກີດຫຼາຍເນື່ອງຈາກການເພີ່ມຂຶ້ນຢ່າງວ່ອງໄວຂອງປະຊາກອນການາດາໃນປັດຈຸບັນ. ການຈຳກັດການວ່າຈ້າງແຮງງານຕ່າງປະເທດ ຈະເຮັດໃຫ້ແຮງງານຕ່າງປະເທດຊົ່ວຄາວທີ່ເຂົ້າໄປເຮັດວຽກຢູ່ການາດາຫຼຸດລົງ65,000ຄົນຕໍ່ປີເມື່ອທຽບກັບເມື່ອກ່ອນ ຫຼື ຫຼຸດຈາກ 6.2% ເປັນ 5% ການາດາ ເປັນປະເທດໜຶ່ງທີ່ກາງຕໍ່ແຮງງານຕ່າງປະເທດເຊິ່ງມີທັງປະເພດແຮງງານໄລຍະຍາວ ແລະ ໄລຍະຊົ່ວຄາວ. ຂະແໜງການທີ່ຕ້ອງການແຮງງານຕ່າງປະເທດຫຼາຍທີ່ສຸດແມ່ນດ້ານກະສິກຳ, ວຽກງານສາທາລະນະສຸກ ແລະ ວຽກກໍ່ສ້າງ.






# ເມຍຂີ້ຫຶງ

*#ບ່າວກະບື*

**ຄັ້ງ**ກ່ອນ... ຍັງມີເມຍຈອມຫຶງ... ຄືນໜຶ່ງເມື່ອຝ່າຍຜົວກັບມາຮອດເຮືອນ, ສາວນາງເມຍກໍຮີບກອດເບິ່ງເສື້ອ ແຕ່ບໍ່ປາກົດເຫັນເສັ້ນຜົມຕິດມາບໍ່. ນາງຮ້ອງໃສ່ຜົວວ່າ: “ຈັ່ງແມ່ນຊາດບໍ່, ດຽວນີ້ເຈົ້າລັກໃຈຂ້ອຍ ໄປຫຼິ້ນກັບສາວຫົວລ້ານ !” ຄືນຕໍ່ມາ, ເມື່ອນາງບໍ່ໄດ້ກິ່ນນ້ຳຫອມຈາກຜົວ,ນາງພັດຮ້ອງໃສ່ຜົວອີກວ່າ:“ອີນັ້ນມີບໍ່ພຽງແຕ່ຫົວລ້ານຊື່ໆ ມັນຍັງຂີ້ໄຮ້ບໍ່ມີເງິນຊື້ຮອດນ້ຳຫອມບໍ່!”

# Jealous Wife

***#BAOKBU***

**There** was once a wife so jealous that when her husband came home one night and she checked his jacket but found no hairs. She the yelled at him Great! so now you're cheating on me with a bald woman! the next night, when she didn't smell any perfume, she yelled again by saying," she's not only bald, but she's too cheap to buy any perfume!"




● ໂດຍ : ພູຜາ

## ຍົກສູງ...

(ຕໍ່ຈາກໜ້າ 3)

ງານ LOs/VOs ໃຫ້ມີຄວາມຮູ້, ຄວາມເຂົ້າໃຈເປັນຢ່າງດີ ໃນດ້ານວຽກງານການປະສານງານ, ພິທີການ, ແລະ ບົດຮຽນຕ່າງໆ ໃນການຮັບແຂກຕ່າງປະເທດທີ່ມາເຂົ້າຮ່ວມກອງປະຊຸມສາກົນທີ່ ສປປລາວ ເປັນເຈົ້າພາບ ແນໃສ່ການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການຕ້ອນຮັບຄະນະຜູ້ແທນລັດຖະສະພາຈາກປະເທດຕ່າງໆທີ່ຈະເດີນທາງມາເຂົ້າຮ່ວມກອງປະຊຸມ AIPA ເຊິ່ງຄາດຄະເນວ່າມີຈຳນວນຫຼາຍກວ່າ 500 ທ່ານ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດມີຄຳເຫັນໂອ້ລົມຊີ້ນຳຕໍ່ກອງປະຊຸມ ເຊິ່ງໄດ້ເນັ້ນໜັກຕື່ມບາງບັນຫາສຳຄັນເປັນຕົ້ນ: ເພີ່ມທະວີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ຕໍ່ວຽກງານທີ່ໄດ້ຮັບມອບໝາຍ ແລະໃຫ້ສຸມສະຕິປັນຍາຫົວຄິດປະດິດສ້າງເຂົ້າໃນວຽກງານຕົວຈິງ, ເຝິກທັກສະ ແລະ ບົດຮຽນການເປັນເຈົ້າພາບທີ່ດີ ແລະ ປະຕິບັດທຸກໜ້າທີ່ວຽກງານທີ່ຖືກມອບໝາຍໃຫ້ປະສົບຜົນສຳເລັດ; ຍົກລະດັບຄວາມຮູ້, ຄວາມສາມາດແລະທັກສະກ່ຽວກັບການກະກຽມຄວາມພ້ອມຮັບໃຊ້ກອງປະຊຸມຂອງພະນັກງານ LOs/VOs ໃຫ້ມີຄວາມຮູ້ທາງດ້ານບໍລິຫານ-ພິທີການ, ເຕັກນິກການປະສານງານ, ການສື່ສານດ້ານພາສາອັງກິດ ແລະ ພາສາປະເທດທີ່ເຂົ້າຮ່ວມກອງປະຊຸມພ້ອມທັງມີການເຜີຍແຜ່ວັດທະນະທຳ, ມູນເຊື້ອປະຫວັດສາດ, ສິລະປະ, ສະຖານທີ່ທ່ອງທ່ຽວ ແລະ ດ້ານອື່ນໆຂອງປະເທດເຮົາ. ສຳຄັນແມ່ນການປະສານງານລະຫວ່າງກອງເລຂາໄອປາແຫ່ງຊາດ ແລະ ບັນດາພະນັກງານLO,VO ໃຫ້ກົມກຽວ, ທັນການ ເພື່ອສ້າງຄວາມສະດວກທຸກຢ່າງໃຫ້ແກ່ບັນດາທ່ານຜູ້ແທນກອງປະຊຸມ, ເພື່ອສ້າງຄວາມປະທັບໃຈ ແລະ ຄວາມຊົງຈຳຂອງແຂກຕໍ່ປະເທດເຮົາ, ຕໍ່ປະຊາຊົນລາວ.

ໃນການເຝິກອົບຮົມ,ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີຂໍ້ມູນທົ່ວໄປຂອງກອງປະຊຸມ; ການກະກຽມຕ້ອນຮັບຄະນະຜູ້ແທນ; ການກະກຽມທາງດ້ານວຽກງານພິທີການ, ສະຖານທີ່ ແລະ ພາຫະນະ. ຈາກນັ້ນ, ກໍໄດ້ມີການປະກອບຄຳຄິດເຫັນ, ສົນທະນາຖາມ-ຕອບຢ່າງສ້າງສັນ, ກົງໄປກົງມາ, ແລກປ່ຽນບົດຮຽນ ແລະປະສົບການຕົວຈິງທີ່ດີເພື່ອຈະໄດ້ນຳໄປໝູນໃຊ້ເຂົ້າໃນການປະຕິບັດຕົວຈິງໃນໄລຍະກອງປະຊຸມໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ; ຕອນບ່າຍຂອງວັນດຽວກັນ, ຍັງໄດ້ເຝິກປະຕິບັດຕົວຈິງຢູ່ຫໍປະຊຸມແຫ່ງຊາດຕື່ມອີກ.

**(ນາງ ວັນນາລິນ ສຸລິວົງສັກ)**

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ